# ຈະຮຽນຕໍ່ ຫຼື ໃສ່ ?

ໂດຍ ດາລາວັນ ພອນແກ້ວ

ຄູ່ມື ສຳລັບນັກຮຽນ ມັດທະຍົມສຶກສາຕອນຕົ້ນ
ແລະມັດທະຍົມສຶກສາຕອນປາຍ

# ຈະຮຽນຕໍ່ ຢູ່ໃສດີ ?

ຄູ່ມື ສຳລັບນັກຮຽນ
ມັດທະຍົມສຶກສາຕອນຕົ້ນ
ແລະ
ມັດທະຍົມສຶກສາຕອນປາຍ



ໂດຍ ດາລາວັນ ພອນແກ້ວ
ຮູບແຕ້ມໂດຍ ຊິກໂກ້ ມິລາກິ

ຈັດພິມໂດຍ ສຳນັກພິມ ດອກເກດ 2012

# ໜ້າ ສາລະບານ


1 ກ່ອນອື່ນຕ້ອງເລືອກອາຊີບ

3 ອາຊີບໃນສັງຄົມ

7 ການແບ່ງອາຊີບ ຕາມລະດັບຄວາມສາມາດ ແລະຄວາມຊຳນານ

9 ອາຊີບຕ່າງໆ ໃນວຽງການກໍ່ສ້າງ

11 ການແບ່ງອາຊີບ ຕາມສາຂາວິຊາຮຽນ

16 ອາຊີບລັດຖະກອນ

19 ອາຊີບທຸລະກິດ

21 ອາຊີບໃດ ເໝາະກັບບຸກຄົນໃດ

24 ຕ້ອງການ ນາຍຊ່າງລົດຍົນເພດຍິງ

27 ບໍ່ຢາກເປັນຄູ

29 ໄປຮຽນອາຊີວະ ຫຼື ໄປຮຽນມະຫາວິທະຍາໄລ

32 ສະຖານທີ່ຮຽນ ອາຊີວະສຶກສາ ໃນ ສປປລາວ

41 ມະຫາວິທະຍາໄລ ໃນ ສປປລາວ

47 ວິທະຍາໄລຄູ ໃນ ສປປລາວ

48 ລະບຽບການສະໝັກເຂົ້າຮຽນ

51 ການເລືອກອາຊີບ

55 ຈະຮຽນຕໍ່ຢູ່ໃສດີ?

62 ເອກະສານອ້າງອີງ

63 ກ່ຽວກັບຜູ່ຂຽນ

# ກ່ອນອື່ນ ຕ້ອງເລືອກອາຊີບ

ການສຶກສາ ທີ່ນັກຮຽນ ໄດ້ຮັບຜ່ານມາ ເລີ່ມຕັ້ງແຕ່ ລະດັບປະຖົມສຶກສາ ຜ່ານລະດັບມັດທະຍົມສຶກສາຕອນຕົ້ນ ຈົນຮອດລະດັບມັດທະຍົມຕອນປາຍ ເອີ້ນວ່າ ການສຶກສາສາມັນ.

ຄຳວ່າ ສາມັນ ຖ້າແປຕາມໂຕ ກໍແມ່ນ "ທຳມະດາ" "ທົ່ວໄປ" ຫຼືວ່າ "ຄືກັນ ສຳລັບທຸກຄົນ". ການສຶກສາສາມັນ ແມ່ນເນັ້ນໜັກ ໃຫ້ຄວາມຮູ້ທົ່ວໄປ ສຳລັບທຸກຄົນ ໂດຍ ແຍກຕາມອາຍຸ. ເຊັ່ນວ່າ ຈະແມ່ນໃຜກໍຕາມ ຖ້າມີອາຍຸ ລະຫວ່າງ 6 ປີ ຫາ 10 ປີ ຕ້ອງຮຽນອ່ານ ຮຽນຂຽນ ຮຽນ ຄິດໄລ່ເລກ . ເມື່ອໃຫຍ່ຂຶ້ນໄປ ອາຍຸ 11 ປີ ຫາ 14 ປີ ຕ້ອງຮຽນຮູ້ ໜ້າທີ່ຂອງພົນລະເມືອງທີ່ດີ ຮຽນຮູ້ກົດເກນ ທຳມະຊາດ ກົດເກນສັງຄົມ ແລະອື່ນໆ ເມື່ອຮອດອາຍຸ 15 ປີ ກໍໃຫຍ່ພຽງພໍ ທີ່ຈະກຽມເຂົ້າຮຽນສາຍອາຊີບຕ່າງໆ.

ຕາມຫຼັກການແລ້ວ ເມື່ອນັກຮຽນຈະຈົບມັດທະຍົມ ສຶກສາຕອນຕົ້ນ ຕ້ອງຕັດສິນໃຈເລືອກອາຊີບແລ້ວ. ບາງຄົນຕ້ອງການປະກອບອາຊີບ ເພື່ອຫາລາຍຮັບຊ່ວຍ ພໍ່ແມ່ ເມື່ອຄົບອາຍຸ 18 ປີ. ສະນັ້ນຄວນຈະໄປຕໍ່ທາງ ສາຍອາຊີວະສຶກສາ ຕາມສາຂາອາຊີບ ທີ່ຕົນເອງຢາກ ປະກອບໃນອະນາຄົດ. ອາຊີວະສຶກສາ ຕ່າງຈາກການ ສຶກສາສາມັນ ເພາະວ່າ ເປັນການສຶກສາເຈາະຈົງຮຽນ ເລື່ອງອາຊີບ ແລະມີຫຼາຍຫຼັກສູດແຕກຕ່າງກັນ.

ສຳລັບນັກຮຽນ ທີ່ບໍ່ຢາກຮຽນສາຍອາຊີບ ແລະມີ ຈຸດປະສົງ ຢາກຮຽນວິຊາການລະດັບສູງ ກໍຕ້ອງສືບຕໍ່ ຮຽນສາມັນ ຢູ່ລະດັບມັດທະຍົມສຶກສາຕອນປາຍ. ຢູ່ ລະດັບນີ້ ນັກຮຽນອາຍຸ 15 ປີ ຫາ 18 ປີ ມີໂອກາດຮຽນ ຮູ້ລາຍລະອຽດຕື່ມ ໃນວິຊາຕ່າງໆ ໃນກຸ່ມພາສາ ກຸ່ມ ວິທະຍາສາດສັງຄົມ ແລະ ກຸ່ມທຳມະຊາດ ເພື່ອໃຫ້ມີ ພື້ນຖານພຽງພໍສຳລັບ ການສຶກສາຕໍ່ ຢູ່ລະດັບມະຫາວິທະ ຍາໄລ. ພ້ອມດຽວກັນນັ້ນ ນັກຮຽນກໍຈະມີເວລາ 3 ປີ ໃນ ການທົດສອບຄວາມມັກ ຄວາມສົນໃຈຂອງຕົນເອງ ວ່າ ຖ້າຮອດຍາມໄປຮຽນຕໍ່ມະຫາວິທະຍາໄລ ຈະເລືອກສາຍ ວິຊາໃດ ຈຶ່ງຈະເໝາະສົມກັບຕົນເອງ. ເຊັ່ນວ່າ ຈະໄປຕໍ່ ວິຊາການທາງດ້ານສັງຄົມ ຫຼື ທາງດ້ານທຳມະຊາດ.

ການເລືອກສາຍວິຊາທີ່ຈະຮຽນ ຢູ່ລະດັບມະຫາ ວິທະຍາໄລ ກໍຕ້ອງກ່ຽວຂ້ອງ ກັບວຽກງານອາຊີບ ທີ່ຕົນ ເອງຈະເຮັດ ເມື່ອຈົບມະຫາວິທະຍາໄລ ຕອນທີ່ນັກຮຽນ ຈະມີອາຍຸປະມານ 22 ຫາ 23 ປີ.

ການຮຽນຕໍ່ ບໍ່ແມ່ນການປ່ຽນບ່ອນຮຽນຊື່ໆ ແຕ່ ແມ່ນການເລືອກເສັ້ນທາງເດີນ ສຳລັບອະນາຄົດຂອງຕົນ ເອງ. ກ່ອນຈະໄປຮຽນຕໍ່ໃສ ນັກຮຽນຕ້ອງຕັດສິນໃຈກ່ອນ ວ່າຈະປະກອບອາຊີບໃດ ແລ້ວຈຶ່ງເລືອກບ່ອນໄປຮຽນຕໍ່. ປຶ້ມຄູ່ມືຫົວນ້ອຍ ທີ່ນັກຮຽນຈັບອ່ານຢູ່ດຽວນີ້ ຈະຊ່ວຍໃຫ້ ນັກຮຽນມີຂໍ້ມູນເພີ່ມຕື່ມ ຊ່ວຍໃຫ້ນັກຮຽນສາມາດຕັດສິນ ໃຈຢ່າງໝັ້ນໃຈ.

# ອາຊີບໃນສັງຄົມ

ນັກຮຽນທຸກຄົນ ໄດ້ຮຽນຜ່ານມາແລ້ວ ກ່ຽວກັບ ປະຫວັດການຂະຫຍາຍຕົວຂອງສັງຄົມມະນຸດ. ຄົງບໍ່ມີ ຜູ່ໃດປະຕິເສດວ່າ ບໍ່ເຄີຍໄດ້ຍິນຄຳວ່າ ສັງຄົມ ປະຖົມ ບູຮານ ສັງຄົມຂ້າທາດ ສັງຄົມສັກດິນາ ສັງຄົມນາຍທຶນ. ຖ້າໃຊ້ ຄວາມ ພະຍາຍາມອີກຕື່ມ ນັກຮຽນຄົງຈື່ໄດ້ວ່າ ເມື່ອມະນຸດເຂົ້າມາດຳລົງຊີວິດຮ່ວມກັນເປັນສັງຄົມ ກໍ ເລີ່ມມີການແບ່ງວຽກກັນ. ຍິ່ງສັງຄົມ ຂະຫຍາຍຕົວຂຶ້ນ ການແບ່ງວຽກເຮັດງານທຳໃນສັງຄົມ ກໍມີຫຼາຍຂຶ້ນ.

ສະນັ້ນ ຄົນທີ່ດຳລົງຊີວິດໃນສັງຄົມຍຸກຕ່າງກັນ ຈະມີມະໂນພາບຕ່າງກັນ ກ່ຽວກັບອາຊີບ.

ເລີ່ມຕົ້ນ ໃນສັງຄົມປະຖົມບູຮານ ຫຼື ໃນສັງຄົມທີ່ ຕິດພັນກັບທຳມະຊາດ ຢາກກິນຫຍັງ ກໍຕ້ອງໄດ້ໄປຊອກ ຫາເອງ ຢາກກິນເຂົ້າ ກໍຕ້ອງປູກເຂົ້າເອງ ຢາກກິນຊີ້ນ ກໍ ຕ້ອງໄປລ່າເນື້ອເອງ ຢາກກິນໝາກໄມ້ ກໍຕ້ອງໄປຊອກ ເອງ. ເມື່ອສັງຄົມຂະຫຍາຍຕົວ ຈະມີຄົນຈຳພວກໜຶ່ງ ເຮັດແຕ່ວຽກລ່າເນື້ອ ເມື່ອຢາກກິນເຂົ້າ ກໍເອົາສັດທີ່ລ່າ ໄດ້ ໄປແລກເອົານຳພວກທີ່ປູກເຂົ້າ. ຜູ່ປູກເຂົ້າກໍບໍ່ຈຳ ເປັນໄປລ່າເນື້ອ ກໍໄດ້ກິນຊີ້ນຄືກັນ. ເຄື່ອງມືສຳລັບທຳມາ ຫາກິນ ແຕ່ລະຄົນຕ້ອງໄດ້ເຮັດເອົາເອງ. ເຊັ່ນ ຜູ່ໄປຫາປາ ກໍຕ້ອງເຮັດເຄື່ອງມືຫາປາເອງ.

ເມື່ອມີຄວາມຕ້ອງການເຄື່ອງມືຫຼາຍຂຶ້ນ ກໍມີການ ແບ່ງງານອີກ. ເກີດມີຈຳພວກທີ່ຜະລິດແຕ່ເຄື່ອງມືເຄື່ອງ

ໃຊ້ ບໍ່ຈຳເປັນຕ້ອງໄປລ່າເນື້ອ ຫຼື ປູກຝັງ ກໍມີອາຫານກິນ ເພາະສາມາດ ນຳເອົາເຄື່ອງໃຊ້ທີ່ຜະລິດໄດ້ ໄປແລກເອົາ ອາຫານ. ຜູ່ລ່າເນື້ອ ກໍສາມາດລ່າໄດ້ຫຼາຍກວ່າເກົ່າ ເພາະ ບໍ່ຕ້ອງເສຍເວລາເຮັດເຄື່ອງມືເອົາເອງ. ໃນສັງຄົມນີ້ ຄົນ ຈະຮູ້ແຕ່ ວຽກງານກະສິກຳ ວຽກງານລ່າເນື້ອ ວຽກງານ ປະໂມງ ແລະ ວຽກງານຫັດຖະກຳ

ເມື່ອມີການແລກປ່ຽນຫຼາຍຂຶ້ນ ກໍມີການປະດິດເງິນ ເພື່ອໃຫ້ການແລກປ່ຽນ ສະດວກຂຶ້ນກວ່າເກົ່າ. ໄລຍະນີ້ ຈຶ່ງມີຄຳວ່າ ອາຊີບເກີດຂຶ້ນ. ອາຊີບ ແມ່ນການເຄື່ອນໄຫວ ອອກແຮງງານຂອງຄົນ ທີ່ໄດ້ຮັບການຕອບແທນເປັນ ເງິນ. ແຕ່ລະຄົນ ທີ່ປະກອບອາຊີບ ຈະໄດ້ຮັບເງິນເພື່ອ ໄປຊື້ອາຫານ ແລະທຸກສິ່ງທີ່ຕ້ອງການ ໃນການດຳລົງ ຊີວິດ.

ສັງຄົມຂະຫຍາຍຕົວສູງໄປເທົ່າໃດ ຈຳນວນອາຊີບ ກໍຍິ່ງມີຫຼາຍຂຶ້ນເທົ່ານັ້ນ. ອາດເວົ້າປີ້ນກັບໄດ້ວ່າ ໃນສັງ ຄົມ ມີຫຼາກຫຼາຍອາຊີບເທົ່າໃດ ສັງຄົມນັ້ນ ກໍຍິ່ງຢູ່ລະດັບ ສູງ.

ສັງຄົມລາວ ໃນໄລຍະປະມານ ຫ້າສິບປີຄືນຫຼັງ ກໍຍັງບໍ່ທັນມີອາຊີບຫຍັງຫຼາຍ. ນັກຮຽນ ທີ່ມີ ພໍ່ເຖົ້າ ແມ່ ເຖົ້າ ດຳລົງຊີວິດໃນຊົນນະບົດ ຄົງໄດ້ຍິນເພິ່ນເລົ່າວ່າ ສະໄໝເພິ່ນ ບໍ່ມີໃຜດອກ ທີ່ຈະບໍ່ຍຶດອາຊີບເຮັດໄຮ່ ເຮັດນາ ແຕ່ລະຄົນ ຕ້ອງປູກເຂົ້າເອງ ຈຶ່ງຈະມີເຂົ້າກິນ. ບໍ່ມີໃຜດອກ ຈະມີອາຊີບຊ່າງໄມ້ປຸກເຮືອນ ເພາະວ່າ ການປຸກເຮືອນສະໄໝນັ້ນບໍ່ໄດ້ຈ້າງໃຜ. ວຽກປຸກເຮືອນ ແມ່ນວຽກຂອງພໍ່ ມີແຕ່ອານກັນໝົດບ້ານ ມາເຮັດຊ່ອຍ ກັນ ບໍ່ມີໃຜຈ້າງໃຜ. ແລະກໍບໍ່ມີໃຜ ໄປຍຶດອາຊີບຕຳ່ແໜ່ນ ເຮັດແຕ່ເສື້ອຜ້າຂາຍໃຫ້ໝູ່ ເພາະວ່າ ແມ່ທຸກຄົນຕ້ອງຕຳ

ແພເປັນ ເພື່ອໃຫ້ໝົດທຸກຄົນໃນຄອບຄົວມີເຄື່ອງນຸ່ງ. ແມ່ນແຕ່ເຄື່ອງມື ເຮັດນາ ລ່າເນື້ອ ຫຼື ເຄື່ອງມືຫາປາ ກໍ ຕ້ອງໄດ້ເຮັດເອົາເອງ. ອາຊີບທຳອິດ ທີ່ຊາວບ້ານເຫັນວ່າ ໄດ້ຮັບການຕອບແທນເປັນເງິນເດືອນ ແມ່ນອາຊີບຄູ ເທົ່ານັ້ນ. ສະນັ້ນ ໃນສະໄໝນັ້ນ ໃຜໆ ກໍມັກໃຫ້ ລູກຫຼານ ຮຽນເປັນຄູ ເພາະວ່າ ບໍ່ຕ້ອງເຮັດວຽກໜັກ ມີເງິນເດືອນ ໄປຊື້ເອົາ ກໍມີເຂົ້າມີປາກິນ. ດົນມາອີກຕື່ມ ຊາວບ້ານຈຶ່ງ ເຫັນນາຍໝໍ ທະຫານ ທີ່ເປັນຄົນມີເງິນເດືອນເຊັ່ນກັນ.

ສະນັ້ນເມື່ອ ພໍ່ເຖົ້າແມ່ເຖົ້າຢູ່ໃນສັງຄົມແບບນັ້ນ, ການເລືອກອາຊີບ ຂອງພໍ່ແມ່ຂອງນັກຮຽນເຊິ່ງເປັນລູກ ຂອງເພິ່ນ ໝາຍຄວາມວ່າ ຂອງຄົນລາວ ຫວ່າງສາມສິບ ກວ່າປີຜ່ານມາ ສ່ວນຫຼາຍ ກໍແມ່ນຄູ, ໝໍ, ທະຫານ ແລະ ຕຳຫຼວດເທົ່ານັ້ນ. ບໍ່ມີໃຜຢາກຮຽນກະສິກຳ ເພາະຄຶດວ່າ ບໍ່ຮຽນກໍໄດ້ເຮັດວຽກນີ້ ນຳພໍ່ນຳແມ່ຢູ່ແລ້ວ. ສຳລັບຜູ້ທີ່ ໄດ້ຮັບທຶນໄປຮຽນທີ່ຕ່າງປະເທດ ເຊິ່ງເປັນປະເທດທີ່ມີ ສັງຄົມຂະຫຍາຍຕົວສູງກວ່າ ກໍຈະໄດ້ຮຽນອາຊີບທີ່ແຕກ ຕ່າງອອກໄປ ໂດຍທີ່ລັດຖະບານເປັນຜູ້ເລືອກໃຫ້ ເພາະ ວ່າ ຜູ້ໄປຮຽນເອງ ຄົງຈະຄຶດອອກເອງບໍ່ໄດ້ວ່າ ຈະຮຽນ ເປັນນາຍຊ່າງແປງລົດ ແປງຫົວລົດໄຟ ຈະຮຽນເປັນ ວິສະວະກອນໄຟຟ້າ ຈະຮຽນເປັນ ນັກສ້າງເຂື່ອນ ນັກຂຸດ ຄົ້ນບໍ່ແຮ່ ຫຼືນັກປະສົມພັນປາ ແລະອື່ນໆ ທີ່ຕ້ອງການເພື່ອ ພັດທະນາປະເທດໃຫ້ຈະເລີນທັນໝູ່.

ມາຮອດປັດຈຸບັນນີ້ ນັກຮຽນຄົງເຫັນວ່າ ສັງຄົມລາວ ຂະຫຍາຍຕົວຂຶ້ນອີກ ແລະ ຄວາມຕ້ອງການໃນອາຊີບ ແມ່ນມີຫຼາຍກວ່າ ສະໄໝຂອງພໍ່ແມ່ ຂອງນັກຮຽນເອງ. ພໍ່ແມ່ຂອງນັກຮຽນສະໄໝນີ້ ຄົງບໍ່ຄຶດອອກວ່າ ອາຊີບ ຊ່າງກໍ່ສ້າງຊ່າງແປງລົດ ຈະເປັນອາຊີບທີ່ໝັ້ນຄົງ

ເພາະວ່າ ສະໄໝເພິ່ນ ບໍ່ມີການກໍ່ສ້າງຫຼາຍ ແລະຄົນບໍ່ໄດ້ໃຊ້ລົດຫຼາຍ ຄືສະໄໝນີ້.

ສະນັ້ນການເລືອກຮຽນອາຊີບ ຄວນຈະໃຫ້ຕົວນັກຮຽນ ເປັນຄົນຕັດສິນໃຈເອງ ແທນທີ່ຈະໃຫ້ພໍ່ແມ່ຕັດສິນໃຈແທນ ເພາະວ່າ ຄວາມຕ້ອງການ ທາງດ້ານອາຊີບຂອງສັງຄົມດຽວນີ້ ແຕກຕ່າງກັນຫຼາຍກັບຂອງສັງຄົມຂອງພໍ່ແມ່ ສະໄໝເພິ່ນເປັນນັກຮຽນ.

24 / VII

# ການແບ່ງອາຊີບ ຕາມລະດັບຄວາມ ສາມາດ ແລະ ຄວາມຊຳນານ

1. **ປະເພດໄຮ້ສີມື** (unskilled) ແມ່ນ ຜູ່ທີ່ບໍ່ມີ ຄວາມຮູ້ຄວາມຊຳນານໃນອາຊີບ ຈະຕ້ອງເຝິກຝົນ ແລະຫາປະສົບການດ້ານອາຊີບ ຫຼື ໃຊ້ແຮງກາຍໃນ ການເຮັດວຽກ.

2. **ປະເພດເຄິ່ງສີມື** (semi skilled) ແມ່ນ ຜູ່ທີ່ມີ ຄວາມຮູ້ຄວາມຊຳນານໃນອາຊີບພຽງເລັກນ້ອຍ ຫຼື ໄດ້ຮັບການອົບຮົມກ່ຽວກັບການປະກອບອາຊີບໃນ ໄລຍະເວລາສັ້ນໆ ບໍ່ເກີນ 1,5 ປີ.

3. **ປະເພດຊ່ຽງສີມື** (skilled) ແມ່ນ ຜູ່ທີ່ມີຄວາມ ຮູ້ຄວາມຊຳນານກ່ຽວກັບວຽກງານໃນອາຊີບຫຼາຍພໍ ສົມຄວນ ມີຄວາມສາມາດສະເພາະດ້ານໃນວຽກງານ ທີ່ເຮັດ ຫຼືໄດ້ຮັບປະກາດສະນີຍະບັດວິຊາຊີບ ທີ່ໃຊ້ ເວລາໃນການເຝິກຝົນສີມື ຕັ້ງແຕ່ 1,5 ເຖິງ 3 ປີ ມີ

ຄວາມຮູ້ ແລະສີມືໃນການປະກອບອາຊີບພໍສົມຄວນ.

4. **ປະເພດເຄິ່ງວິຊາຊີບ** (technical) ແມ່ນຜູ່ທີ່ມີຄວາມຮູ້ຄວາມຊຳນານ ຕະຫຼອດຈົນຄວາມຮອບຮູ້ກ່ຽວກັບວຽກງານໃນອາຊີບ ກວ້າງຂວາງພໍສົມຄວນ ສາມາດແນະນຳ ຫຼື ຄວບຄຸມວຽກງານກ່ຽວກັບອາຊີບນັ້ນໄດ້ ມີຄວາມຮູ້ກ່ຽວກັບອາຊີບໃນລະດັບອະນຸປະລິນຍາ ຫຼື ທຽບເທົ່າ.

5. **ປະເພດວິຊາຊີບ** (professional) ແມ່ນ ຜູ່ທີ່ມີຄວາມຮູ້ຄວາມຊຳນານ ແລະຄວາມຮອບຮູ້ກ່ຽວກັບວຽກງານໃນອາຊີບຢ່າງກວ້າງຂວາງ ສາມາດແນະນຳຄວບຄຸມ ຕະຫຼອດຈົນບໍລິຫານວຽກງານໃນອາຊີບນັ້ນໄດ້ເປັນຢ່າງດີ ມີຄວາມຮູ້ກ່ຽວກັບອາຊີບໃນລະດັບປະລິນຍາຕີ ຂຶ້ນໄປ.

# ອາຊີບຕ່າງໆ ໃນວຽກງານກໍ່ສ້າງ

ທີ່ພັກອາໄສ ເປັນໜຶ່ງໃນສີ່ປັດໄຈພື້ນຖານຂອງ ການດຳລົງຊີວິດ ທີ່ຄົນເຮົາຂາດບໍ່ໄດ້. ສະນັ້ນ ອາຊີບທີ່ ກ່ຽວຂ້ອງກັບທີ່ພັກອາໄສ ເປັນອາຊີບທີ່ໝັ້ນຄົງ ແລະມີ ລາຍຮັບດີ. ກ່ອນຈະມີທີ່ພັກອາໄສ ຕ້ອງມີການກໍ່ສ້າງ.

ຖ້າພວກເຮົາໄດ້ຜ່ານການປຸກສ້າງເຮືອນຢູ່ ຂອງຕົນ ເອງ ຫຼືວ່າ ໄດ້ມີໂອກາດໄປສັງເກດ ການກໍ່ສ້າງເຮືອນຫຼັງ ໜຶ່ງ ແຕ່ຕົ້ນຮອດປາຍ ຈະເຫັນວ່າ ການກໍ່ສ້າງ ຕ້ອງການ ຄົນເຮັດວຽກຈຳນວນຫຼາຍ ທີ່ມີລະດັບຄວາມຮູ້ຄວາມ ສາມາດແຕກຕ່າງກັນ ແລະມີວິຊາການແຕກຕ່າງກັນ.

ມີທັງຄົນທີ່ເຮັດວຽກດ້ວຍແຮງງານທາງກາຍ ເຊັ່ນ ຂຸດຂຸມ ຂົນດິນ ຂົນຊາຍ ແບກຫາບຕ່າງໆ ທີ່ເອີ້ນວ່າ ອາຊີບໄຮ້ສີມື.



ຖັດຈາກນັ້ນ ກໍມີຄົນເຮັດວຽກ ແບບເຄິ່ງສີມື ທີ່ຜ່ານ ການຮຽນເຮັດຈາກຕົວຈິງ ບໍ່ມີທິດສະດີຫຍັງ ເຊັ່ນ ຊ່າງ ກໍ່ ຊ່າງມັດເຫຼັກ ຊ່າງເທເບຕົ້ງ ຊ່າງໂບກ ຊ່າງທາສີ ... ຜູ້ ປະກອບອາຊີບເຫຼົ່ານີ້ ເມື່ອເຮັດເປັນເວລາດົນນານ ຈະມີ ຄວາມຊຳນານຫຼາຍ ແລະມີວຽກເຮັດງານທຳບໍ່ຂາດ.

ໃນວຽກງານກໍ່ສ້າງ ຍັງຕ້ອງມີ ນາຍຊ່າງ ເຊິ່ງໄດ້ ຜ່ານການຮຽນວິຊາຊີບກ່ຽວຂ້ອງ ທີ່ມີພາກປະຕິບັດຕົວຈິງ

ຫຼາຍ ແລະ ທິດສະດີໜ້ອຍໜຶ່ງ ເຊັ່ນ ຊ່າງຕິດຕັ້ງໄຟຟ້າ ຊ່າງກໍ່ສ້າງ ຊ່າງໄມ້ຕັ້ງວົງແລະບານ ປະຕູ ປ່ອງຢ້ຽມ ຊ່າງ ລະບົບນ້ຳ ຊ່າງຈອດໂລຫະ...

ວຽກງານປຸກສ້າງເຮືອນ ປະກອບດ້ວຍຫຼາຍວຽກ ງານທີ່ກ່າວມາຂ້າງເທິງ ແລະກ່ຽວກັບຄົນເຮັດວຽກ ຈຳ ນວນຫຼາຍ ສະນັ້ນ ຈຳເປັນຕ້ອງມີ ຄົນໜຶ່ງທີ່ເປັນຜູ່ວາງ ແຜນວຽກ ເປັນຜູ່ປະສານງານ ແລະຄວບຄຸມວຽກງານ ທັງໝົດ. ຄົນຜູ່ນີ້ ຕ້ອງໄດ້ຜ່ານການຮຽນອາຊີບທີ່ໃຊ້ ເວລາດົນກວ່າ ແລະມີຄວາມຮູ້ທາງທິດສະດີ ຫຼາຍພໍ ປານກັນກັບການຮຽນປະຕິບັດຕົວຈິງ. ລາວຕ້ອງຮູ້ລາຍ ລະອຽດຂອງທຸກວຽກງານ ທຸກຂັ້ນຕອນຂອງການກໍ່ສ້າງ ຈຶ່ງຈະສາມາດຄວບຄຸມການກໍ່ສ້າງ ໃຫ້ສຳເລັດໄດ້. ສ່ວນຫຼາຍແມ່ນຄົນທີ່ຮຽນຈົບລະດັບ ອາຊີວະຊັ້ນສູງ ຫຼື ຮຽນຈົບວິສະວະກອນກໍ່ສ້າງ.

ນອກຈາກນີ້ ໃນການກໍ່ສ້າງທີ່ພັກອາໄສ ທີ່ມີຂະ ໜາດໃຫຍ່ ຈະຕ້ອງມີການອອກແບບ ໃຫ້ເຫັນຮູບຮ່າງ ຂອງທີ່ພັກນັ້ນ ແລະມີການຄິດໄລ່ໃຫ້ຮູ້ລ່ວງໜ້າວ່າ ການ ປຸກສ້າງນັ້ນ ຈະຕ້ອງໄດ້ໃຊ້ເງິນຫຼາຍເທົ່າໃດ. ຜູ່ທີ່ເຮັດ ວຽກອອກແບບຄິດໄລ່ນີ້ ເອີ້ນວ່າ ສະຖາປະນິກ. ລາວ ຕ້ອງຮຽນຈົບຢ່າງຕ່ຳ ລະດັບປະລິນຍາຕີ ຢູ່ມະຫາວິທະ ຍາໄລ.

# ການແບ່ງອາຊີບ ຕາມສາຂາວິຊາຮຽນ

**1. ກຸ່ມສາຂາວິຊາການເຝິກຫັດຄູແລະສຶກສາສາດ**

• ຄູອະນຸບານ, ຄູປະຖົມ, ຄູອາຊີວະສຶກສາ, ຄູເຝິກຕົວຈິງ, ການສຶກສາຜູ່ໃຫຍ່, ການສ້າງຄູ, ການສຶກສາຄົນພິການ

• ຄູສອນວິຊາສະເພາະ

• ສຶກສາສາດ: ການພັດທະນາຫຼັກສູດ

• ການປະເມີນການສຶກສາ, ການວັດແລະທົດສອບ, ການຄົ້ນຄວ້າວິໄຈການສຶກສາ, ແລະ ອື່ນໆ

**2. ກຸ່ມສາຂາວິຊາ ມະນຸດສາດ**

• ສາສະໜາ, ພາສາຕ່າງປະເທດ, ວັດທະນະທຳຕ່າງປະເທດ, ວັນນະກຳ

• ພາສາແມ່: ພາສາປະຈຳຊາດ, ພາສາທ້ອງຖິ່ນ, ພາສາຊົນເຜົ່າ



**3.ກຸ່ມສາຂາວິຊາ ວິຈິດສິນແລະປະຍຸກສິນ**

• ວິຈິດສິນ: ການແຕ້ມ, ການປັ້ນ

• ສິລະປະການສະແດງ: ດົນຕີ, ລະຄອນ, ຟ້ອນ, ກາຍະສິນ

• ສິລະປະກຣາຟິກ ແສງສ່ຽງ: ການຖ່າຍຮູບ, ການພາບພະຍົນ, ການຜະລິດ ເພງ ດົນຕີ



**4. ກຸ່ມສາຂາວິຊາ ສັງຄົມສາດ, ທຸລະກິດ ແລະກົດໝາຍ**

4.1 ກຸ່ມສັງຄົມສາດແລະພຶດຕິກຳສາດ

ເສດຖະສາດ, ປະຫວັດເສດຖະກິດ, ເສດຖະກິດການເມືອງ, ສັງຄົມວິທະຍາ, ປະຊາກອນ, ສຶກສາວິໄຈຊີວິດມະນຸດ ດ້ານສັງຄົມ, ເຜົ່າພັນວິທະຍາ, ຈິດຕະວິທະຍາ, ພູມສາດດ້ານສັງຄົມ, ສຶກສາກ່ຽວກັບສັນຕິພາບແລະການຂັດແຍ່ງ, ສິດທິມະນຸດ.

4.2 ສື່ສານມວນຊົນ

• ນັກຂ່າວ ບັນນາທິການໜັງສືພິມ ວາລະສານ ວິທະຍຸ ໂທລະພາບ,

• ບັນນາຮັກ ຫໍສະໝຸດ, ພະນັກງານ ພິພິທະພັນ ສຳເນົາ ແລະອື່ນໆ

4.3 ບໍລິຫານແລະຄຸ້ມຄອງ

• ການຂາຍສົ່ງ ການຕະຫຼາດ ການຂາຍ ປະຊາສຳພັນ ອະຫັງລິມະຊັບ

• ການເງິນ ການທະນາຄານ ການປະກັນໄພ ການວິເຄາະ ການລົງທຶນ

• ບັນຊີ, ການກວດບັນຊີ, ບັນທຶກກະແສລາຍວັນ

• ການບໍລິຫານ, ການປົກຄອງ, ການບໍລິຫານສະຖາບັນ, ການບໍລິຫານບຸກຄະລະກອນ

• ເລຂານຸການ ແລະ ວຽກງານຫ້ອງການ

4.4 ນິຕິສາດ

• ໄອຍະການທ້ອງຖິ່ນ, ທີ່ປຶກສາ ດ້ານກົດໝາຍ ແລະ ລະບຽບຕ່າງໆ

• ຜູ່ພິພາກສາຄະດີ, ທະນາຍຄວາມ

5. ກຸ່ມສາຂາວິຊາ ວິທະຍາສາດ

5.1. ວິທະຍາສາດ ກ່ຽວກັບຊີວິດ

• ຊີວະສາດ, ພືດສາດ, ພະຍາດວິທະຍາ, ພິດວິທະຍາ, ຈຸລະຊີວະສາດ, ສັດຕະວະສາດ, ແມງໄມ້ວິທະຍາ, ວິທະຍາສາດນົກ, ຢີນວິທະຍາ, ຊີວະເຄມີສາດ, ຊີວະຟີຊິກສາດ

5.2. ວິທະຍາສາດ ກາຍະພາບ (ບໍ່ມີຊີວິດ)

• ດາລາສາດ ແລະ ວິທະຍາສາດ ດ້ານຈັກກະວານ, ຟີຊິກສາດ, ເຄມີສາດ, ທໍລະນີສາດ, ພູມສາດກາຍະພາບ, ອຸຕຸນິຍົມວິທະຍາ ວິທະຍາສາດບັນຍາກາດ ວິທະຍາສາດມະຫາສະໝຸດ ວິທະຍາສາດພູໄຟ

5.3. ຄະນິດສາດ ແລະ ສະຖິຕິ

5.4. ວິທະຍາສາດຄອມພິວເຕີ

6. ກຸ່ມສາຂາວິຊາ ວິສະວະກຳ, ການປຸງແຕ່ງ ແລະ ການກໍ່ສ້າງ

6.1. ການແຕ້ມວິສະວະກຳ, ກົນລະສາດ, ວຸງກໂລຫະ, ໄຟຟ້າ, ເອເລັກໂຕຣນິກ, ໂທລະຄົມມະນະຄົມ, ພະລັງງານ ແລະວິສະວະກຳເຄມີ, ບຳລຸງຮັກສາພາຫະນະ, ການສຳຫຼວດ.

6.2. ການປຸງແຕ່ງ

ອາຫານ, ເຄື່ອງດື່ມ, ແຜ່ນແພ, ເສື້ອຜ້າ, ເກີບ: ວຸງກໜັງ, ວັດສະດຸ (ໄມ້, ເຈ້ຍ: ປັດສະຕິກ, ແກ້ວ, ອື່ນໆ) ການຂຸດຄົ້ນບໍ່ແຮ່

6.3. ສະຖາປັດຕະຍະກຳ ແລະ ການກໍ່ສ້າງ

ສະຖາປັດຕະຍະກຳ ແລະ ຜັງເມືອງ, ການວາງແຜນຊຸມຊົນ, ແຜນທີ່, ການກໍ່ສ້າງອາຄານສະຖານທີ່, ໂຍທາ.

7. ການກະສິກຳ

7.1. ການກະສິກຳ, ປ່າໄມ້ ແລະ ປະໂມງ

7.2. ສັດຕະວະແພດ



8. ສຸຂະພາບ ແລະ ສາທາລະນະສຸກ

8.1. ສຸຂະພາບ

• ການແພດ: ການຍະວິພາກສາດ, ສະລີລະວິທະຍາ, ການລະບາດວິທະຍາ, ຈຸລັງວິທະຍາ, ພູມຄຸ້ມກັນວິທະຍາ, ພະຍາດວິທະຍາ, ...

• ການບໍລິການທາງແພດ: ບໍລິການກວດສຸຂະພາບ, ສາທາລະນະສຸກ, ການຢາ, ການບຳບັດ, ອົງຄະທຽມ, ໂພຊະນາການ , ການປິ່ນປົວ, ການປັບປຸງສາຍຕາ.

• ພະຍາບານ: ການພະຍາບານທົ່ວໄປ, ຜະດຸງຄັນ

• ການບໍລິການເລື່ອງແຂ້ວ: ທັນຕະແພດ, ຜູ່ຊ່ວຍທັນຕະແພດ, ການອະນາໄມແຂ້ວ, ນາຍຊ່າງດ້ານແຂ້ວທຽມ

8.2. ການບໍລິການສັງຄົມ

• ວຽກງານການດູແລ: ການດູແລຄົນພິການ, ການດູແລເດັກ, ການບໍລິການແກ້ບັນຫາຊາວໜຸ່ມ, ການບໍລິການຜູ້ເຖົ້າ

• ວຽກງານສັງຄົມ: ການໃຫ້ຄຳປຶກສາ, ສັງຄົມສົງເຄາະ

9. ວຽກງານບໍລິການ



9.1. ບໍລິການບຸກຄົນ

ການໂຮງແຮມ ແລະ ຮ້ານອາຫານ, ການເດີນທາງ ແລະ ທ່ອງທ່ຽວ, ກິລາແລະການພັກຜ່ອນ, ການແຕ່ງຜົມ, ການເສີມສວຍ, ອະນາໄມ, ຊັກເຄື່ອງ, ການແຕ່ງໜ້າ, ເຄຫະກຳ (ວຽກບ້ານການເຮືອນ)

9.2. ບໍລິການຂົນສົ່ງ

ນາຍກຳປັ່ນ, ວິທະຍາສາດການເດີນເຮືອ, ພະນັກງານບໍລິການໃນເຮືອບິນ, ການຄວບຄຸມການບິນ, ການບໍລິການ ລົດໄຟ, ການບໍລິການ ລົດຍົນ, ການໄປສະນີ

9.3. ການຮັກສາສິ່ງແວດລ້ອມ

ຮັກສາ, ຄຸ້ມຄອງ, ປ້ອງກັນ ສິ່ງແວດລ້ອມ. ຄວບຄຸມ ມົນລະພິດທາງອາກາດ ແລະ ທາງນ້ຳ, ການປ້ອງກັນ ແລະ ສະຫວັດດີການ ແຮງງານ.

9.4. ການບໍລິການຮັກສາຄວາມປອດໄພ

• ການປົກປັກຮັກສາຊັບສິນ ແລະ ບຸກຄົນ: ຕຳຫຼວດ ແລະ ນັກສືບ, ວຽກງານຕ້ານອາຊະຍາກຳ, ການດັບເພີງ ແລະ ວຽກງານປ້ອງກັນອັກຄີໄພ, ຄວາມປອດໄພ ຂອງພົນລະເມືອງ

• ວຽກງານທະຫານ

# ອາຊີບລັດຖະກອນ

ລັດຖະກອນ ແມ່ນ ຜູ່ທີ່ປະກອບອາຊີບ ໃນອົງການ ຈັດຕັ້ງຕ່າງໆ ຂອງລັດ ແລະໄດ້ຮັບຄ່າຕອບແທນຈາກລັດ ເປັນເງິນເດືອນ.

ອົງການຈັດຕັ້ງຂອງລັດ ມີຫຍັງແດ່?

ນັກຮຽນແຕ່ລະຄົນ ທີ່ຮຽນຢູ່ ມັດທະຍົມຕອນຕົ້ນ ຂຶ້ນໄປ ຈົນຮອດມັດທະຍົມ ຕອນປາຍ ຄົງໄດ້ຮຽນແລ້ວ ໃນວິຊາສຶກສາພົນລະເມືອງ ກ່ຽວກັບ ການປົກຄອງ ຂອງລັດ. ຂໍທົບທວນໂດຍຫຍໍ້ດັ່ງນີ້: ລັດ ປະກອບດ້ວຍ ສາມ ພາກສ່ວນ ຄື ພາກສ່ວນນິຕິບັນຍັດ ເຊິ່ງແມ່ນສະພາ ແຫ່ງຊາດ, ພາກສ່ວນ ບໍລິຫານ ເຊິ່ງປະກອບດ້ວຍ ລັດຖະບານ ແລະອົງການປົກຄອງທ້ອງຖິ່ນ ແລະພາກ ສ່ວນ ຕຸລາການ ເຊິ່ງແມ່ນ ສານຕ່າງໆ ແລະອົງການ ໄອຍະການ ປະຊາຊົນ. ໃນລັດຖະບານ ມີ ກະຊວງຕ່າງໆ, ອົງການທຽບເທົ່າກະຊວງ, ອົງການປົກຄອງ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ແລະ ຂັ້ນບ້ານ[1]. ແຕ່ ລະພາກສ່ວນ ທີ່ກ່າວມາ ກໍມີ ການຈັດຕັ້ງ ແຕ່ລະດັບສູນ ກາງ ຈົນຮອດລະດັບພື້ນຖານ. ຕົວຢ່າງ ໂຮງຮຽນຕ່າງໆ ຂອງລັດ ກໍເປັນອົງກອນຂອງລັດຢູ່ລະດັບພື້ນຖານ ໂດຍ ທີ່ ລະດັບສູນກາງ ແມ່ນກະຊວງສຶກສາ. ສະນັ້ນ ຄູໃນ ໂຮງຮຽນຂອງລັດ ແລະ ພະນັກງານທີ່ເຮັດວຽກ ຢູ່ກະຊວງ

---

[1] ປະຈຸບັນ ບຸກຄົນທີ່ ເຮັດວຽກນຳ ທ້ອງການບ້ານ ບໍ່ເອີ້ນວ່າ ລັດຖະກອນ ເພາະວ່າ ບໍ່ໄດ້ຮັບ ເງິນເດືອນຈາກລັດ.

ສຶກສາ ລ້ອມແຕ່ເອີ້ນວ່າ ເປັນລັດຖະກອນ.

ລັດຖະກອນ ຮັບເງິນເດືອນ ຕາມລະດັບການສຶກສາ ທີ່ຮຽນຈົບມາ. ລະບົບການຂຶ້ນເງິນເດືອນຂອງລັດຖະກອນ ແມ່ນອີງໃສ່ອາຍຸການ ເປັນສ່ວນຫຼາຍ. ໝາຍຄວາມວ່າ ຜູ່ທີ່ເຮັດວຽກດົນ ຈະໄດ້ເງິນເດືອນຫຼາຍກວ່າ ຜູ່ທີ່ເຂົ້າ ເຮັດວຽກໃໝ່. ນອກຈາກເງິນເດືອນແລ້ວ ລັດຖະກອນ ຍັງໄດ້ຮັບເງິນ ອຸດໜູນຄອບຄົວ ສຳລັບຜູ່ທີ່ ມີເມຽ ຫຼື ຜົວ ທີ່ບໍ່ມີອາຊີບ ແລະສຳລັບ ຜູ່ທີ່ມີລູກ ອາຍຸບໍ່ເກີນ 18 ປີ. ເມື່ອມີປະສົບການ ຫຼາຍຂຶ້ນ ລັດຖະກອນກໍຈະມີຕຳແໜ່ງ ເປັນຫົວໜ້າໜ່ວຍງານ ຫົວໜ້າພະແນກ ຫົວໜ້າກົມ ເຊິ່ງ ແຕ່ລະຕຳແໜ່ງ ກໍມີເງິນໜ້າທີ່ ຕື່ມໃສ່ກັບເງິນເດືອນອີກ. ຫຼັງຈາກເຮັດວຽກຮອດອາຍຸ 60 ປີ [2] ກໍສາມາດເຊົາເຮັດ ວຽກໄດ້ ແຕ່ຍັງຈະໄດ້ຮັບເງິນເດືອນຕໍ່ໄປຕະຫຼອດຊີວິດ ແຕ່ເອີ້ນວ່າ ເງິນບຳນານ.

ການຈະປະສົບຜົນສຳເລັດ ໃນການປະກອບອາຊີບ ລັດຖະກອນນັ້ນ ກ່ອນອື່ນ ຜູ່ສະໝັກເຂົ້າເຮັດວຽກ ຕ້ອງ ເຂົ້າໃຈວ່າ ບ່ອນທີ່ຕົນເອງຈະເຮັດວຽກນັ້ນ ມີບົດບາດ ອັນໃດ. ຖ້າເປັນລັດຖະກອນ ຢູ່ຂັ້ນເມືອງ ຂຶ້ນຮອດຂັ້ນກະ ຊວງ ຈະມີໜ້າທີ່ທາງດ້ານການຄຸ້ມຄອງມະຫາພາກ ສະນັ້ນ ວຽກງານຈະກ່ຽວຂ້ອງ ກັບການເກັບກຳຂໍ້ມູນ,

---

[2] ອາຍຸບຳນານ ແມ່ນລັດກຳນົດໃຫ້. ລັດອາດປັບປ່ຽນ ຕາມຄວາມຕ້ອງການຂອງປະເທດຊາດ ໃນແຕ່ລະ ໄລຍະ ຂອງການພັດທະນາເສດຖະກິດສັງຄົມ.

ການປະສານງານ, ການຕິດຕາມສະພາບ, ການແນະນຳ, ການແກ້ບັນຫາ, ການລາຍງານແລະອື່ນໆ. ແນ່ນອນ ລັດຖະກອນຢູ່ຂະແໜງການໃດ ກໍຕ້ອງກຳໃຫ້ໄດ້ ຂໍ້ກຳນົດ ກົດລະບຽບ ນະໂຍບາຍ ແຜນການຕ່າງໆ ຂອງ ຂະແໜງການຂອງຕົນເອງ. ນອກຈາກນີ້ ກໍອາດຕ້ອງ ໄດ້ ໃຊ້ທັກສະ ໃນການປາກເວົ້າເຈລະຈາ ເພາະວ່າ ຈະມີ ປະຊາຊົນ ຫຼື ລັດຖະກອນ ມາພົວພັນວຽກງານນຳ ຫຼືບໍ່ ກໍ ໄດ້ລົງຫາພື້ນຖານ ເພື່ອກຳສະພາບຕົວຈິງ ເປັນປະຈຳ.

# ອາຊີບ ທຸລະກິດ

ເມື່ອໄດ້ເຫັນຄຳວ່າ ທຸລະກິດ ນັກຮຽນສ່ວນຫຼາຍ ຈະຄຶດຫາແຕ່ບໍລິສັດໃຫຍ່ໆ ຫຼື ໂຮງງານໃຫຍ່ໆ ແລະຄຶດວ່າ ທຸລະກິດ ເປັນອຸງກທີ່ບໍ່ແມ່ນວ່າ ຜູ່ໃດກໍເຮັດໄດ້. ແຕ່ຄວາມຈິງແລ້ວ ທຸກຄົນສາມາດເຮັດທຸລະກິດໄດ້. “ທຸລະກິດ” ຫຼື ອີກຄຳໜຶ່ງທີ່ມີຄວາມໝາຍຄືກັນ “ການປະກອບກິດຈະການ” (ເວົ້າຫຍໍ້:ການປະກອບການ) ມີຄວາມໝາຍວ່າ ແມ່ນການລົງທຶນເຮັດສິ່ງໃດໜຶ່ງ ທີ່ສ້າງຜົນກຳໄລ ທີ່ເປັນລາຍຮັບໃຫ້ຜູ່ລົງທຶນ. ຍົກຕົວຢ່າງ ຜູ່ຍິງຄົນໜຶ່ງ ລົງທຶນຊື້ໃບຕອງ ດອກໄມ້ ແລະໄມ້ຂັດ ລາວເອົາສິ່ງທີ່ຊື້ມາ ມາສ້າງເປັນໝາກເບັ່ງສຳລັບໄຫວ້ພະ ແລ້ວເອົາໄປຂາຍ ໃນເວລາວັນສິນ. ກຳໄລທີ່ໄດ້ ກໍເປັນລາຍຮັບຂອງລາວ. ໝາຍຄວາມວ່າ ລາວບໍ່ຕ້ອງລໍຖ້າເງິນເດືອນຈາກໃຜ ລາວສ້າງລາຍຮັບໃຫ້ລາວເອງ.

ການປະກອບກິດຈະການ ມີຢ່ສາມຂະໜາດ ຄື: ຂະໜາດນ້ອຍ ຂະໜາດກາງ ແລະ ຂະໜາດໃຫຍ່. ຕົວຢ່າງທີ່ຍົກມາເທິງນີ້ ແມ່ນຈັດຢູ່ໃນການປະກອບການຂະໜາດນ້ອຍ. ທຸກຄົນສາມາດ ປະກອບກິດຈະການຂະໜາດນ້ອຍໄດ້ ຂຶ້ນກັບການຊອກສະແຫວງຫາ ແລະໂອກາດ. ນັກປະກອບກິດຈະການ ຂະໜາດໃຫຍ່ປະຈຸບັນ ເກືອບວ່າທຸກຄົນ ແມ່ນເລີ່ມຈາກຂະໜາດນ້ອຍກ່ອນ. ໂດຍທຳມະຊາດແລ້ວ ຜູ່ທີ່ມັກປະກອບກິດຈະການ ຈະບໍ່ຢຸດຢູ່ບ່ອນເກົ່າ. ເມື່ອເຮັດດ້ວຍຕົນເອງຜູ່ດຽວ

ຈະໄດ້ລາຍຮັບສ່ຳໜຶ່ງ ຖ້າຢາກໄດ້ຫຼາຍກວ່ານັ້ນ ກໍຕ້ອງ ຊວນຄົນມາຊ່ວຍຕື່ມ ໂດຍຄິດໄລ່ຄ່າແຮງງານ ໃຫ້ຜູ່ ມາຊ່ວຍ. ເມື່ອລົບລາຍຈ່າຍທຸກຢ່າງອອກ ກໍເຫັນວ່າ ມີ ລາຍຮັບຫຼາຍກວ່າ ຕົວເອງເຮັດຜູ່ດຽວ. ດົນໄປ ຖ້າລາວມີລູກຈ້າງຫຼາຍກວ່າເກົ່າ ການປະກອບ ກິດຈະການຂອງລາວ ກໍຫຍັບຈາກຂະໜາດນ້ອຍ ຂຶ້ນ ໄປເປັນຂະໜາດກາງ. ນອກຈາກວ່າ ກິດຈະການ ຂອງລາວຈະໃຫຍ່ຂຶ້ນ ແລະສ້າງລາຍຮັບໃຫ້ລາວຫຼາຍ ຂຶ້ນແລ້ວ ລາວຍັງຊ່ວຍໃຫ້ຜູ່ອື່ນມີວຽກເຮັດງານທຳ ແລະໄດ້ເງິນເດືອນຈາກລາວອີກ.

ລັດຖະບານລາວ ມີນະໂຍບາຍຫຼາຍປະການ ເພື່ອສົ່ງ ເສີມຜູ່ປະກອບກິດຈະການ ຂະໜາດນ້ອຍ ແລະ ຂະໜາດກາງ ເຊັ່ນ ນະໂຍບາຍ ການຢືມເງິນຈາກ ທະນາຄານ ດ້ວຍດອກເບ້ຍຕ່ຳ.

ການປະກອບກິດຈະການບາງຢ່າງ ຕ້ອງການໃຫ້ຜູ່ ປະກອບການ ມີຄວາມຮູ້ສາມັນ ລະດັບໃດໜຶ່ງ ກໍ ປະສົບຜົນສຳເລັດສູງ ແຕ່ກິດຈະການບາງຢ່າງ ຮຽກຮ້ອງໃຫ້ຜູ່ປະກອບການໄດ້ຮຽນຮູ້ທາງດ້ານສີມື ລະດັບໜຶ່ງຈຶ່ງຈະດຳເນີນໄດ້ຜົນດີ. ເຊັ່ນ ຖ້າຢາກ ປະກອບກິດຈະການຜະລິດໂຕະຕັ່ງຂາຍ ກໍຕ້ອງໄດ້ໄປ ຮຽນຊ່າງໄມ້ ຊ່າງເຟີນີເຈີກ່ອນ, ຢາກຕັດຫຍິບເຄື່ອງນຸ່ງ ຂາຍ ກໍຕ້ອງໄປຮຽນຊ່າງຕັດຫຍິບກ່ອນ.

ສະຫຼຸບແລ້ວ ກ່ອນທີ່ນັກຮຽນຈະເລືອກຮຽນຫຍັງນັ້ນ ຄວນຄຶດເຖິງອະນາຄົດວ່າ ຮຽນມາແລ້ວ ຈະໄປປະກອບ ອາຊີບອັນໃດ.

# ອາຊີບໃດ
# ເໝາະກັບບຸກຄົນໃດ

ໃນການຊອກຮູ້ວ່າ ຈະເລືອກຮຽນອາຊີບໃດດີນັ້ນ ນັກຮຽນ ອາດເຫັນຕົວຢ່າງ ຂອງຜູ້ໃຫຍ່ອ້ອມຂ້າງ ແລະ ເຫັນວ່າ ອາຊີບທີ່ເພິ່ນປະກອບນັ້ນ ຄືວ່າ ເປັນໜ້າສົນໃຈ ແລະ ຄຶດຢາກເປັນຄືເພິ່ນ ໂດຍທີ່ບໍ່ທັນໄດ້ຄຶດວ່າ ອາຊີບນັ້ນຈະເໝາະສົມກັບຕົນເອງບໍ່.

ນອກຈາກເຫັນອາຊີບທີ່ໜ້າສົນໃຈແລ້ວ ນັກຮຽນຕ້ອງສຶກສາປະເພດອາຊີບນັ້ນ ທຽບໃສ່ຕົນເອງອີກ. ສົມມຸດວ່າ ເຮົາສົນໃຈອາຊີບໃດໜຶ່ງ ແຕ່ບໍ່ຮູ້ວ່າ ອາຊີບນັ້ນຕ້ອງຢູ່ໃນຫ້ອງການຕະຫຼອດເວລາ ບໍ່ໄດ້ເດີນທາງໄປໃສຈັກເທື່ອ ສ່ວນຕົວເຮົາເອງ ຜັດມັກຢູ່ນອກຫ້ອງ ສີແຈ ຢາກເຫັນສິ່ງໃໝ່ເລື້ອຍໆ ຖ້າໄປເລືອກຮຽນອາຊີບນັ້ນ ເຮົາກໍຈະເຮັດວຽກຢ່າງຍາກລຳບາກ ຂັດກັບສ່ວນເລິກຂອງຕົນເອງ ເວົ້າງ່າຍໆ ກໍຄືວ່າ ເຮັດວຽກແບບບໍ່ມີຄວາມສຸກ ແລະ ຄຶດຢາກໄປເຮັດວຽກໃໝ່ ເຊິ່ງໝາຍຄວາມວ່າ ສິ່ງທີ່ຮຽນມາຫຼາຍປີ ກໍຖິ້ມໄປລ້າໆ.

ເພື່ອເປັນຂໍ້ມູນໃນການເລືອກອາຊີບ ໃຫ້ເໝາະສົມກັບບຸກຄົນ ເພິ່ນຈຶ່ງ ໄດ້ຈັດອາຊີບ ເປັນກຸ່ມດັ່ງຕໍ່ໄປນີ້:

| | ກຸ່ມອາຊີບ | ຕົວຢ່າງ ຊື່ອາຊີບ |
|---|---|---|
| 1 | ວຽກງານ ຈັກກົນ (Mechanical) ຜູ່ສົນໃຈ ວຽກງານດ້ານນີ້ ມັກເຮັດວຽກກ່ຽວກັບເຄື່ອງມື ເຄື່ອງໃຊ້ ເຄື່ອງຈັກກົນ ສາມາດຢົບຈັບ ແລະ ໃຊ້ເຄື່ອງມືຢ່າງຄ່ອງແຄ້ວ | ຊ່າງຕັດຫຍິບ, ຊ່າງຄອມພິວເຕີ, ຊ່າງແປງ ເຄື່ອງໄຟຟ້າ, ຊ່າງແປງລົດ, ແລະ ອື່ນໆ |
| 2 | ວຽກງານຄິດໄລ່ (Computation) ຜູ່ສົນໃຈວຽກງານດ້ານນີ້ ມັກເຮັດວຽກທີ່ກ່ຽວກັບຕົວເລກ ການແກ້ບັນຫາຕາມລຳດັບຂັ້ນຕອນ | ນັກບັນຊີ, ພະນັກງານທະນາຄານ, ພະນັກງານສະຖິຕິ, ແລະ ອື່ນໆ |
| 3 | ວຽກງານວິທະຍາສາດ (Scientific) ຜູ່ສົນໃຈວຽກງານດ້ານນີ້ ມັກຄົ້ນຄວ້າຫາຄວາມຮູ້ໃໝ່ໆ ສົນໃຈໄຝ່ຮູ້ກ່ຽວກັບ ຄວາມເປັນໄປຕາມທຳມະຊາດ ເປັນຄົນຊ່າງສັງເກດສໍ້ຖາມ ແລະຕ້ອງການຄົ້ນຄວ້າ ຫາຄຳຕອບໃນສິ່ງທີ່ຕົນເອງສົງໄສ. | ນັກວິທະຍາສາດ, ນັກຄຸ້ມຄອງ ສິ່ງແວດລ້ອມ, ແລະ ອື່ນໆ |
| 4 | ວຽກງານຊັກຊວນໂຄສະນາ (Persuasive) ຜູ່ສົນໃຈວຽກງານນີ້ ມັກພົບປະກັບຄົນ ມີຄວາມສາມາດໃນການເວົ້າ ເພື່ອເຊີນຊວນແລະໂນ້ມນ້າວໃຈຜູ່ອື່ນ | ພະນັກງານໂຄສະນາ, ພະນັກງານ ສາທາລະນະສຸກ, ນັກພັດທະນາຊົນນະບົດ, ໂຄສົກ ແລະ ອື່ນໆ |
| 5 | ວຽກງານສິນລະປະ (Artistic) ຜູ້ສົນໃຈວຽກງານດ້ານນີ້ ມັກເຮັດວຽກແບບສ້າງສັນ ໃຊ້ຈິນຕະນາການ ປະດິດ ຜົນງານອອກມາ ເປັນຮູບປະທຳ ໃຫ້ຜູ່ອື່ນເຂົ້າໃຈດ້ວຍຄວາມສວຍງາມ ປານີດ | ນັກແຕ້ມ, ນັກປັ້ນ, ນັກແກະສະຫຼັກ, ນັກຖ່າຍຮູບ ແລະ ອື່ນໆ |

| | | |
|---|---|---|
| 6 | ວຽກງານວັນນະກຳ (Literary) ຜູ່ສົນໃຈໃນວຽກງານດ້ານນີ້ ມັກເຮັດວຽກທີ່ກ່ຽວກັບ ການຄົ້ນຄວ້າ ຫາຄວາມຮູ້ ເລື່ອງລາວຕ່າງໆ ຈາກການອ່ານ ແລະ ຖ່າຍທອດຄວາມຄິດເຫັນ ດ້ວຍການຂີດຂຽນ | ນັກປະພັນ, ນັກແຕ່ງເພງ, ແລະ ອື່ນໆ |
| 7 | ວຽກງານດົນຕີ (Musical) ຜູ່ສົນໃຈງານດ້ານນີ້ ມັກເຮັດວຽກທີ່ກ່ຽວຂ້ອງກັບ ຈິນຕະນາການສ້າງສັນ ກ່ຽວກັບດົນຕີແລະການສະແດງ | ນັກຮ້ອງ, ນັກດົນຕີ, ນັກຈັດງານສະແດງ ແລະ ອື່ນໆ |
| 8 | ວຽກງານບໍລິການສັງຄົມ (Social services) ຜູ່ທີ່ສົນໃຈວຽກງານດ້ານນີ້ ມັກເຮັດວຽກແບບໃຫ້ຄວາມຊ່ວຍເຫຼືອຜູ່ອື່ນ ໃຫ້ຄວາມສົນໃຈ ເອົາໃຈໃສ່ດູແລ ແລະບໍລິການຜູ່ອື່ນ | ຄູ, ແພດ, ຕຳຫຼວດ, ທະຫານ, ແລະອື່ນໆ |
| 9 | ວຽກງານຫ້ອງການ (Clerical) ຜູ່ສົນໃຈວຽກງານດ້ານນີ້ ມັກເຮັດວຽກພາຍໃນອາຄານ ທີ່ຕ້ອງການຄວາມລະອຽດຖີ່ຖ້ວນ ຊັດເຈນ ແລະວຽກທີ່ກ່ຽວຂ້ອງກັບເອກະສານຕ່າງໆ | ເລຂາ, ພະນັກງານ ຮັບຕ້ອນຢູ່ໂຮງແຮມ ຫ້ອງອາຫານ, ພະນັກງານຫ້ອງການ |
| 10 | ວຽກງານນອກຫ້ອງການ (Outdoor) ຜູ່ສົນໃຈວຽກງານດ້ານນີ້ ມັກເຮັດວຽກທີ່ຕ້ອງໃຊ້ເວລາຢູ່ນອກເຮືອນ ຫຼື ຢູ່ກາງແຈ້ງ ເປັນສ່ວນໃຫຍ່. | ວິສະວະກອນ ກໍ່ສ້າງ, ນັກສຳຫຼວດສິ່ງແວດລ້ອມ, ພະນັກງານນຳທ່ຽວ ແລະ ອື່ນໆ |

# ຕ້ອງການ ນາຍຊ່າງລົດຍົນ ເພດຍິງ

ວິທະຍາໄລເຕັກນິກ ລາວ-ເຢຍລະມັນ ເປັນ ສະຖາບັນ ທີ່ມີຊື່ສຽງຍາວນານ ເກືອບຫ້າສິບປີມາແລ້ວ ໃນດ້ານການກໍ່ສ້າງນາຍຊ່າງລົດຍົນ ໃຫ້ແກ່ສັງຄົມລາວ.

ເມື່ອບໍ່ດົນມານີ້ ຜູ່ຂຽນ ໄດ້ນຳພານັກຮຽນຊັ້ນມັດທະຍົມ ໄປທັດສະນະສຶກສາ ທີ່ ວິທະຍາໄລດັ່ງກ່າວ. ຜູ່ອຳນວຍການໂຮງຮຽນ ໄດ້ໃຫ້ຂໍ້ມູນແກ່ພວກເຮົາຫຼາຍ ປະການ ກ່ຽວກັບຂະແໜງວິຊາການຊ່າງ ທີ່ເປີດສອນ ໃນໂຮງຮຽນແຫ່ງນີ້. ພ້ອມກັນນັ້ນ ເພິ່ນກໍບອກພວກເຮົາວ່າ ປະຈຸບັນ ມີຄວາມຕ້ອງການຫຼາຍ ໃຫ້ແມ່ຍິງ ໄປຮຽນວິຊາຊ່າງລົດຍົນ. ນີ້ເປັນຂ່າວສານ ທີ່ແປກໃໝ່ ແລະໜ້າສົນໃຈ ເຮັດໃຫ້ນັກຮຽນໃຈຈົດຈໍ່ ຕັ້ງໃຈຟັງ ຢາກຮູ້ກິ້ກສາຍປາຍເຫດ.

ການຮຽນວິຊາການຊ່າງ ຕ້ອງມີການປະຕິບັດຈິງ ເມື່ອຮຽນຈົບແລ້ວຕ້ອງ ສາມາດເຮັດວຽກໄດ້ໂລດ

ດັ່ງນັ້ນ ທາງວິທະຍາໄລເຕັກນິກລາວເຢຍລະມັນ
ຈຶ່ງມີສາຍຜູກພັນ ກັບບໍລິສັດລົດຍົນ ຫຼາຍແຫ່ງ
ໃນນະຄອນຫຼວງວຽງຈັນ ເພື່ອເອົາ ນັກຮຽນທີ່ຈະຈົບການ
ສຶກສາໄປລົງເຮັດວຽກຕົວຈິງ ເອີ້ນວ່າ ການລົງເຝິກຫັດ.
ສ່ວນຫຼາຍ ເມື່ອຮຽນຈົບແລ້ວ ນາຍຊ່າງໜຸ່ມທັ້ງຫຼາຍ
ກໍຖືກຮັບເຮັດວຽກ ຢູ່ບ່ອນທີ່ລົງເຝິກຫັດນັ້ນເລີຍ.
ໃນໄລຍະຫຼັງນີ້ ທາງບໍລິສັດລົດຍົນເຫຼົ່ານັ້ນ ຂໍຮ້ອງທາງ
ໂຮງຮຽນວ່າ ໃຫ້ສົ່ງນັກຮຽນຍິງມາໃຫ້ແດ່. ທາງໂຮງຮຽນ
ກໍຈົນໃຈ ບໍ່ສາມາດສົ່ງໃຫ້ໄດ້ ເນື່ອງຈາກວ່າ ຍິງສາວ
ບໍ່ມັກຮຽນແປງລົດ ເພາະບໍ່ຢາກໃຫ້ມືຕົນເອງ ດຳເປື້ອນ
ດ້ວຍຄາບນ້ຳມັນເຄື່ອງ. ແຕ່ທາງບໍລິສັດ ໄດ້ອະທິບາຍ
ວ່າ ມີວຽກຫຼາຍຢ່າງ ທີ່ຕ້ອງການໃຫ້ນາຍຊ່າງແມ່ຍິງເຮັດ
ເຊິ່ງບໍ່ມີແຕ່ວຽກແປງລົດເທົ່ານັ້ນ ເຊັ່ນວຽກຮັບຕ້ອນລູກຄ້າ
ທີ່ມາແປງລົດ ຫຼື ມາຊື້ລົດ. ແມ່ຍິງໂດຍທຳມະຊາດ ຈະມີ
ຄວາມອ່ອນໂຍນ ຄ່ອຍເວົ້າຄ່ອຍຈາ . ເວລາເຈົ້າຂອງລົດ
ຜູ້ຊາຍທີ່ບໍ່ພໍໃຈນຳລົດຕົນເອງທີ່ມີຂໍ້ບົກພ່ອງ ຢາກເຂົ້າ
ມາຕໍ່ວ່າບໍລິສັດ ເມື່ອມາພົບຜູ້ຮັບຕ້ອນເພດຍິງ ກໍຈະຄວບ
ຄຸມອາລົມຂອງຕົນເອງ ແລະຄວາມຢາກຮ້າຍ ກໍຫຼຸດຜ່ອນ
ລົງ. ແນ່ນອນ ແມ່ຍິງຮັບຕ້ອນນັ້ນ ນອກຈາກ ມີອັດທະຍາ
ໄສທີ່ດີແລ້ວ ກໍຕ້ອງມີຄວາມຮູ້ດີ ທາງດ້ານ ກົນໄກຂອງລົດ
ສາມາດໂອ້ລົມກັບລູກຄ້າກ່ຽວກັບອາການຂອງລົດໄດ້.
ສະນັ້ນ ທາງເຈົ້າຂອງບໍລິສັດລົດຍົນ ຈຶ່ງເຫັນວ່ານາຍຊ່າງ
ລົດເພດຍິງ ຈະສ້າງປະໂຫຍດໃຫ້ແກ່ທຸລະກິດຂອງເຂົາ

ເຈົ້າຫຼາຍ. ນອກຈາກວຽກງານຮັບຕ້ອນ ແມ່ຍິງ ທີ່ມີ ຄວາມຮູ້ເລື່ອງລົດ ຍັງສາມາດເຮັດວຽກສ່ວງອາໄຫຼ່ລົດ ໄດ້ດີກວ່າຜູ່ຊາຍ ເພາະມີ ຄວາມເອົາໃຈໃສ່ ໃນເລື່ອງຈັດ ມ້ຽນເຄື່ອງໃຫ້ເປັນລະບຽບຮຽບຮ້ອຍ.

ຜູ່ຂຽນຟັງແລ້ວ ຍັງຄຶດອອກອີກວ່າ ນາຍຊ່ຽງລົດຍົນ ເພດຍິງ ຍັງສາມາດນຳຄວາມຮູ້ ໄປເຮັດທຸລະກິດຂາຍ ເຄື່ອງອາໄຫຼ່ ລົດໄດ້ອີກ.

ເນື່ອງຈາກ ມີຄວາມຕ້ອງການຫຼາຍຄືກ່າວມາ ເພິ່ນ ຈຶ່ງມີເກນການຮັບພິເສດ ສຳລັບນັກຮຽນຍິງທີ່ມາສະໝັກ ຮຽນ ແລະມີເບ້ຍລ້ຽງພິເສດອີກດ້ວຍ.

ສະນັ້ນ ການຮຽນການຊ່ຽງລົດຍົນ ຈຶ່ງເປັນທາງ ເລືອກ ທີ່ໜ້າສົນໃຈ ອີກທາງໜຶ່ງ ສຳລັບ ນັກຮຽນຍິງ ທີ່ພວມເລືອກບ່ອນ ຮຽນຕໍ່.

24/VII
ห้องเอกสาร

# ບໍ່ຢາກເປັນຄູ



ຕອນຂ້ອຍຮຽນຢູ່ປະຖົມ ຂ້ອຍສະອອນຄູຂອງຂ້ອຍອີຫຼີ.

ເພິ່ນຊ່າງເປັນຄົນໃຈດີ ແລະຮູ້ຈັກຫຼາຍສິ່ງຫຼາຍຢ່າງ. ເພິ່ນເປັນຄືເທວະດາພຸ້ນລະ. ຂ້ອຍບໍ່ເຄີຍຈັບສໍ ຄືກັບໝູ່ຄົນອື່ນທີ່ໄດ້ຮຽນຊັ້ນອະນຸບານມາກ່ອນ.ເພື່ອຈະບັງຄັບສໍ ໃຫ້ໄປຕາມເສັ້ນຄົດໆ ງໍໆ ຄືກັບຄູຂີດໄວ້ ຢູ່ເທິງກະດານ ຄືວ່າຍາກແທ້. ຂ້ອຍນ້ອຍໃຈ ພໍນ້ຳຕາຢາກອອກ ແຕ່ມັນກໍອອກບໍ່ທັນ ເພາະຄູເທວະດາຢູ່ໃກ້ໆ ຂ້ອຍ. ເພິ່ນມາແປງນິ້ວມືຂ້ອຍ ເພື່ອຈັບສໍໃຫ້ຖືກວິທີ ແລ້ວກໍຈັບມືຂ້ອຍໃຫ້ລາກສໍໄປຕາມທິດທາງທີ່ຖືກຕ້ອງ. ໂອ່ ມະຫັດສະຈັນ ມືຂ້ອຍສາມາດສ້າງເສັ້ນຄືກັບຄູຂີດໄວ້ຢູ່ກະດານແລ້ວ. ຂ້ອຍຍິ້ມອອກມາໄດ້ ພ້ອມທັງຫຼຽວຂຶ້ນເບິ່ງໜ້າຄູ. ຂ້ອຍກໍເຫັນວ່າ ຄູກໍຍິ້ມອອກ ຍ້ອນເຫັນຂ້ອຍຍິ້ມນັ້ນເອງ. ເມື່ອຈົບປະຖົມ ຂ້ອຍຮູ້ຂຽນຮູ້ອ່ານ ຮູ້ຄິດໄລ່ ເຂົ້າໃຈສິ່ງທີ່ຢູ່ອ້ອມໂຕ. ຂ້ອຍຮູ້ສຶກຄື ນົກນ້ອຍທີ່ປີກແຂງຂຶ້ນ ຢາກບິນໄປຫຼາຍແຫ່ງຫົນ ແຕ່ໃນໃຈກໍມີຈຸດໜຶ່ງ ທີ່ຢາກໄປເຖິງນັ້ນ ຄື ຂ້ອຍຢາກກາຍເປັນຄູ ຢາກກາຍເປັນຜູ່ທີ່ສ້າງຄວາມສຸກໃຫ້ຜູ່ອື່ນ. ຂ້ອຍເຂົ້າຮຽນຕໍ່ໂຮງຮຽນມັດທະຍົມ ພ້ອມກັບຄວາມຕື່ນຕາຕື່ນໃຈ. ນັກຮຽນໃນຫ້ອງ ຄືມາຫຼາຍແທ້. ມີຫຼາຍຄົນທີ່ບໍ່ເຄີຍພົບພໍ້ກັນ ເພາະວ່າ ມາຈາກບ້ານຕ່າງກັນ. ພວກເຮົານັ່ງແຫຍ້ກັນຈົນຈະຂຽນໜັງສືບໍ່ໄດ້ ຂ້ອຍອຸກໃຈຫຼາຍ ຂ້ອຍພວມຕັ້ງໃຈຂຽນບົດຮຽນ ໃສ່ປຶ້ມຂຽນຂອງຕົນເອງ ຕ້ອງຂຽນງາມໆ ແລ້ວຢູ່ຊ້ຳໆ ນັກຮຽນຜູ່ນັ່ງແປະຂ້ອຍກໍມາຕຳມື

ຂ້ອຍ. ໂອ້ ປຶ້ມຂ້ອຍເປື້ອນໝົດ. ສອງຄົນເຂົາພວມຢອກກັນ ຊິຕີກັນ ເລີຍຫຼີກມາ ຕຳຂ້ອຍ. ນ້ຳຕາຂ້ອຍຢາກອອກ ຫຼຽວຫາເທອະດາມາຊ່ອຍກໍບໍ່ມາ. ເພິ່ນຢູ່ພຸ້ນ ແປະກະດານດຳ ຢູ່ໄກໆພຸ້ນ ເພິ່ນຍັງຄາຊຽນບົດຮຽນໃສ່ກະດານ ຄົງຈະບໍ່ໄດ້ຍິນ ພວກເຂົາກວນກັນຢູ່ຂ້າງຂ້ອຍ. ເຮີ້, ຂ້ອຍຫຼຽວໄປທົ່ວຫ້ອງ ບໍ່ແມ່ນແຕ່ບ່ອນຂ້ອຍ ນັ່ງ ທີ່ມີເຫດການນັ້ນ ເກືອບໝົດທຸກໂຕະ ເປັນແນວນັ້ນ.

- ພວກເຈົ້າມິດແດ່ແມ້, ກວນກັນເຮັດຫຍັງ ຈົດແລ້ວເບາະ ບົດຮຽນ?

ຂ້ອຍຕື່ນຍຸບ ທີ່ໄດ້ຍິນສຽງຮ້ອງຂອງຄູ. ເພິ່ນຢືນຄ້ຳແອວຢູ່ໜ້າກະດານ. ໂຮ້ ! ໜ້າຂອງເພິ່ນເປັນຕາຢ້ານອີຫຼີ. ແຕ່ວ່າ ໄດ້ຜົນ ນັກຮຽນຢູ່ທາງຂ້າງຂ້ອຍ ເຊົາຢອກກັນ ແລະບໍ່ມາຕຳມືຂ້ອຍ. ເອີ, ເທອະດາບໍ່ມາຊ່ອຍ ແຕ່ແມ່ນນາງຍັກ ມາຊ່ອຍ. ໝົດໂມງແລ້ວ ເພິ່ນກໍຍ່າງອອກໄປ. ຢູ່ໂຮງຮຽນມັດທະຍົມ ພວກເຮົາມີ ຫຼາຍຄູປ່ຽນກັນເຂົ້າມາສອນ ວິຊາໃຜວິຊາມັນ. ສອນແລ້ວກໍອອກໄປ. ບໍ່ມີຜູ້ໃດ ຍ່າງມາໃກ້ຂ້ອຍເລີຍ. ຂ້ອຍກໍເລີຍບໍ່ຮູ້ວ່າຈິດໃຈແທ້ເພິ່ນເປັນແນວໃດ. ເວລາເພິ່ນ ອະທິບາຍບົດຮຽນ ຂ້ອຍກໍບໍ່ໄດ້ຍິນຄັກ ເພາະເວລາເພິ່ນເລີ່ມເວົ້າ ນັກຮຽນຢູ່ທາງ ຫຼັງ ກໍພາກັນລົມກັນແຂ່ງກັບຄູ. ຫຼາຍເທື່ອ ຄູກໍຢຸດອະທິບາຍ ແລ້ວກໍເທດສະໜາ ພວກເຮົາ. ເບິ່ງເພິ່ນຄືຊິອຸກໃຈຫຼາຍ. ເປັນຄູນີ້ ຊ່າງລຳບາກແທ້.

ດຽວນີ້ຂ້ອຍປະກອບອາຊີບແລ້ວ ແຕ່ບໍ່ແມ່ນຄູ. ຂ້ອຍກໍບໍ່ຮູ້ວ່າ ຂ້ອຍປ່ຽນ ໃຈແຕ່ຍາມໃດ. ເຖິງແນວໃດກໍຕາມ ຂ້ອຍຍັງຄຶດວ່າ ອາຊີບຄູເປັນອາຊີບທີ່ປະເສີດ ທີ່ສຸດ. ຖ້າບໍ່ມີຄູ ຂ້ອຍກໍບໍ່ມີຄວາມຮູ້ ບໍ່ສາມາດຮຽນວິຊາອາຊີບ ແລະບໍ່ສາມາດ ດຳລົງຊີວິດຢ່າງມີຄວາມສຸກ ຄືສູ່ມື້ນີ້. ແຕ່ວ່າ ເປັນຄູນີ້ ຜູ່ໃດກໍອາດເປັນໄດ້ ແຕ່ຈະ ເປັນຄູທີ່ດີໄດ້ ຄົນນັ້ນຕ້ອງມີຄວາມຮັກຕໍ່ນັກຮຽນແທ້ໆ ຢາກສ້າງຄົນແທ້ໆ ຈຶ່ງຈະ ເປັນຄູທີ່ນັກຮຽນບໍ່ສາມາດລືມໄດ້ ຄືກັບຄູຂອງຂ້ອຍ ຢູ່ປະຖົມ.

# ไປຮຽນອາຊີວະ ຫຼື ໄປ ຮຽນມະຫາວິທະຍາໄລ?

ຫຼັງຈາກ ນັກຮຽນໄດ້ຮຽນຄວາມຮູ້ທົ່ວໄປ ຈົນເຖິງໄດ້ຮັບ ໃບປະກາດສະນິຍະບັດ ມັດທະຍົມສຶກສາຕອນຕົ້ນ ຫຼື ຮຽນອີກ ຈົນໄດ້ໃບປະກາດສະນິຍະບັດ ມັດທະຍົມຕອນ ປາຍ ກໍສາມາດໄປຮຽນຕໍ່ອາຊີບ ທີ່ຕົນເອງຕ້ອງການ. ຢູ່ ສປປລ ໂຮງຮຽນທີ່ຈັດໃຫ້ນັກຮຽນ ເຂົ້າຮຽນວິຊາ ອາຊີບນັ້ນ ແບ່ງອອກເປັນ ສອງກຸ່ມໃຫຍ່ ຄື ໂຮງຮຽນ ອາຊີວະສຶກສາ ແລະ ມະຫາວິທຍາໄລ.

**ການຮຽນ ທີ່ ໂຮງຮຽນອາຊີວະສຶກສາ**

ເມື່ອນັກຮຽນ ເຂົ້າຮຽນໂຮງຮຽນ ອາຊີວະສຶກສາ ນັກຮຽນຈະໄດ້ຮຽນກ່ຽວກັບ ເຕັກນິກ ວິຊາຊີບ ທີ່ເຮັດ ໃຫ້ມີຄວາມຮູ້, ຄວາມສາມາດດ້ານວິຊາສະເພາະ, ໂດຍຮຽນໃຊ້ເຄື່ອງໄມ້ເຄື່ອງມືຕົວຈິງ ທີ່ຈະໄດ້ໃຊ້ ເມື່ອ ອອກໄປປະກອບອາຊີບທີ່ກ່ຽວຂ້ອງ. ເຊັ່ນ ຖ້າຮຽນ ຊ່າງລົດຍົນ ກໍຮຽນສ່ວນປະກອບຕ່າງໆ ຂອງລົດຍົນ ໂດຍໄດ້ຈັບບາຍລົດຍົນຕົວຈິງ. ໃນປີສຸດທ້າຍກ່ອນ ຈົບອອກໄປ ນັກຮຽນຕ້ອງໄປເຝິກຫັດ ກັບສະຖານທີ່ ຈິງ ເຊັ່ນ ຖ້າຮຽນ ບໍລິການໂຮງແຮມ ກໍໄດ້ໄປເຝິກຫັດ ໃນໂຮງແຮມ. ສ່ວນຫຼາຍ ສະຖານທີ່ຮັບເຝິກຫັດນັ້ນ ກໍ ຈະຮັບເຂົ້າເຮັດວຽກເລີຍ ຫຼັງຈາກນັກຮຽນ ໄດ້ຮັບໃບ

ປະກາດສະນິຍະບັດແລ້ວ.

ການຮຽນ ອາຊີວະສຶກສາ ມີຢູ່ ສາມລະດັບ:

1. ອາຊີວະຊັ້ນຕົ້ນ: ແມ່ນການສຶກສາວິຊາຊີບຊຳນານ ງານສຳລັບນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນຫຼື ທຽບເທົ່າຂຶ້ນໄປ, ໃຊ້ເວລາຮຽນແຕ່ຫົກເດືອນ ຫາ ສາມປີ.
2. ວິຊາຊີບຊັ້ນກາງ: ແມ່ນການສຶກສາ ເຕັກນິກ-ວິຊາຊີບສຳລັບນັກຮຽນທີ່ຈົບວິຊາຊີບຊັ້ນຕົ້ນ, ມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ໃຊ້ ເວລາຮຽນ ສອງຫາສາມປີ ໃນຫຼັກສູດປົກະຕິ ແລະ ໜຶ່ງຫາສອງປີ ສຳຫຼັບວິຊາຊີບຕໍ່ເນື່ອງຕາມ ຫຼັກສູດ ຫຼື ເຊື່ອມຕໍ່.
3. ວິຊາຊີບຊັ້ນສູງ: ແມ່ນການສຶກສາເຕັກນິກ-ວິຊາ ຊີບໃນລະດັບວິທະຍາໄລ, ສູນການສຶກສາ ຫຼື ສະ ຖາບັນການສຶກ, ທຽບເທົ່າ ວິທະຍາໄລ ຊຶ່ງຮັບເອົາ ນັກຮຽນທີ່ຈົບວິຊາຊີບຊັ້ນກາງ, ມັດທະຍົມ ສຶກສາ ຕອນປາຍ ຫຼື ທຽບເທົ່າຂຶ້ນໄປ ໃຊ້ເວລາຮຽນສອງ ຫາສາມປີ ໃນຫຼັກສູດປົກະຕິ ແລະ ໜຶ່ງຫາ ສອງ ປີ ສຳລັບການສຶກສາວິຊາຊີບ ຕາມຫຼັກສູດຕໍ່ ເນື່ອງຫຼືເຊື່ອມຕໍ່.

**ການຮຽນ ທີ່ ມະຫາວິທະຍາໄລ**

ນັກຮຽນ ສາມາດເຂົ້າຮຽນມະຫາວິທະຍາໄລໄດ້ ຫຼັງຈາກໄດ້ຮັບໃບປະກາດສະນິຍະບັດ ມັດທະຍົມ ສຶກສາຕອນປາຍ, ຫຼື ຫຼັງຈາກ ໄດ້ຮັບໃບປະກາດສະ ນິຍະບັດ ອາຊີວະສຶກສາວິຊາຊີບຊັ້ນກາງ ຫຼື ຊັ້ນສູງ ຂຶ້ນໄປ. ການຮຽນຢູ່ມະຫາວິທະຍາໄລ ແມ່ນການຮຽນ

ເປັນ ນັກວິຊາການ, ນັກວິທະຍາສາດ, ນັກຄົ້ນຄ້ວາ. ເຊິ່ງການຮຽນລະດັບນີ້ ຈະມີການຮຽນພາກທິດສະດີ ຫຼາຍກວ່າ ການປະຕິບັດຕົວຈິງ. ສ່ວນການປະຕິບັດ ຕົວຈິງ ກໍແມ່ນຢູ່ໃນຫ້ອງທົດລອງ ຫຼື ສະໜາມຂອງ ມະຫາວິທະຍາໄລເອງ ເປັນສ່ວນຫຼາຍ.

ການຮຽນ ຢູ່ມະຫາວິທະຍາໄລ ກໍມີຫຼາຍລະດັບ ດັ່ງນີ້:

1. ອະນຸປະລິນຍາໃຊ້ເວລາສຶກສາ ສອງ ຫາ ສາມປີ ສຳລັບຫຼັກສູດປົກກະຕິ ແລະ ໜຶ່ງປີເຄິ່ງຂຶ້ນໄປ ສຳລັບຫຼັກສູດຕໍ່ເນື່ອງ ຫຼື ເຊື່ອມຕໍ່.
2. ປະລິນຍາຕີ ໃຊ້ເວລາສຶກສາ ສີ່ປີຂຶ້ນໄປ ສຳລັບ ຫຼັກສູດປົກກະຕິ ແລະ ໜຶ່ງປີເຄິ່ງຂຶ້ນໄປສຳລັບ ຫຼັກສູດຕໍ່ເນື່ອງຫຼື ເຊື່ອມຕໍ່
3. ຫຼັງປະລິນຍາຕີ ລຶງເລິກຂະແໜງການ ຫຼື ຊ່ຽວຊານ ໃຊ້ເວລາສຶກສາ ໜຶ່ງປີຂຶ້ນໄປ; ສຳລັບຜູ່ທີ່ຮຽນ ຫຼັກສູດປະລິນຍາໂທຕ່ຳກວ່າສອງປີ ແລະຜູ່ທີ່ຮຽນ ຊ່ຽວຊານ ຫຼັງປະລິນຍາຕີ ນັບແຕ່ສາມປີຂຶ້ນໄປໄດ້ ກຳນົດໄວ້ຕ່າງຫາກ.
4. ປະລິນຍາໂທ ແມ່ນການສຶກສາຖັດຈາກປະລິນຍາຕີ ຫຼືທຽບເທົ່າຂຶ້ນໄປ,ໃຊ້ເວລາສຶກສາສອງປີ.
5. ປະລິນຍາເອກ ແມ່ນການສຶກສາຖັດຈາກປະລິນຍາ ໂທ ຫຼືທຽບເທົ່າ,ໃຊ້ເວລາສຶກສາສາມປີຂຶ້ນໄປ.



# ໂຮງຮຽນອາຊີວະສຶກສາ ໃນ ສປປ ລາວ

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ |
|---|---|---|---|---|---|
| 1 | ວິທະຍາໄລເຕັກນິກ ສັບພະວິຊາ. ບ.ໂສກປ່າໝອງ, ມ.ສີສັດຕະນາກ, ນະຄອນຫຼວງວຽງຈັນ (021) 313303, 312420. | ວັດແທກ-ແຜນທີ່ | | ⊙ | |
| | | ວັດແທກ-ຄຸ້ມຄອງທີ່ດິນ | | | ⊙ |
| | | ສຳຫຼວດວັດແທກ-ບໍລິຫານທີ່ດິນ | | ⊙ | ⊙ |
| | | ຂອກຄົ້ນ-ສຳຫຼວດແຮ່ | | ⊙ | ⊙ |
| | | ຂຸດຄົ້ນ-ປຸງແຕ່ງແຮ່ | | ⊙ | ⊙ |
| | | ໄຟຟ້າຕາຂ່າຍ | | ⊙ | ⊙ |
| | | ໄຟຟ້ານ້ຳຕົກ | | | ⊙ |
| 2 | ເຕັກນິກປາກປາສັກ ບ. ສີຖານເໜືອ ມ.ສີໂຄດຕະບອງ ນະຄອນຫຼວງວຽງຈັນ (021) 213142, 228167 | ເຕັກໂນໂລຊີລິດຍົນ | | ⊙ | |
| | | ຈັກກົນໂຮງງານ | | ⊙ | |
| | | ໄຟຟ້າເຕັກນິກ | | ⊙ | |
| | | ເອເລັກໂຕຣນິກ | | ⊙ | ⊙ |
| | | ຈອດ ແລະ ທ່ຳ | | ⊙ | |
| | | ຊ່າງໄມ້-ເຟີນີເຈີ | | ⊙ | |
| | | ກໍ່ສ້າງເຄຫະສະຖານ | | ⊙ | |
| | | ອາຫານ-ການໂຮງແຮມ/ທ່ອງທ່ຽວ | | ⊙ | |
| | | ການບັນຊີ | | ⊙ | |
| | | ເລຂານຸການ | | ⊙ | |
| | | ຕັດຫຍິບ | ⊙ | | |
| | | ບໍລິຫານໂຮງແຮມແລະທ່ອງທ່ຽວ | | | ⊙ |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ |
|---|---|---|---|---|---|
| 3 | ເຕັກນິກລາວ-ເຢຍລະມັນ<br>ບ.ວັດນາກ. ມ.ສີສັດຕະນາກ.<br>ນະຄອນຫຼວງວຽງຈັນ<br>(021) 312432, 312538 | ເຕັກໂນໂລຊີລົດຍົນ | | | ⊙ |
| | | ໄຟຟ້າເຕັກນິກ | | | ⊙ |
| | | ຈັກກົນໂຮງງານ | | ⊙ | |
| | | ຈອດ ແລະ ທໍ່ນ້ຳ | | ⊙ | |
| 4 | ໂຮງຮຽນ ເຕັກນິກ<br>ກະສິກຳດົງຄຳຊ້າງ,<br>ບ.ດົງຄຳຊ້າງ,<br>ມ.ຫາດຊາຍຟອງ,<br>ນະຄອນຫຼວງວຽງຈັນ<br>(021)480510 | ປູກຝັງ | | ⊙ | ⊙ |
| | | ລ້ຽງສັດ | | ⊙ | ⊙ |
| | | ປ່າໄມ້ | ⊙ | | ⊙ |
| 5 | ໂຮງຮຽນວິຊາຊີບ<br>ມິດຕະພາບ<br>ວຽງຈັນ-ຮ່າໂນ້ຍ<br>ບ້ານໂພນໄຊ,<br>ເມືອງ ໄຊເຊດຖາ<br>ນະຄອນຫຼວງວຽງຈັນ<br>ໂທ:(021)412461<br>ແຟັກ:(021)453126 | ອິນຟໍເມຕິກຄຸ້ມຄອງ ຫ້ອງການ | | ⊙ | |
| | | ອິນຟໍເມຕິກທຸລະກິດ (ບັນຊີ) | | ⊙ | |
| | | ອິນຟໍເມຕິກຄຸ້ມຄອງ ຫ້ອງການ | | ⊙ | |
| | | ເຕັກນິກຄອມພິວເຕີ | | ⊙ | |
| | | ເອເລັກໂຕຣນິກ | | ⊙ | ⊙ |
| | | ຄອມພິວເຕີທຸລະກິດ | | | ⊙ |
| | | ເຕັກໂນໂລຊີ ຂໍ້ມູນ-ຂ່າວສານ | | | ⊙ |
| 6 | ສູນພັດທະນາອາຊີວະ ສຶກສາ ບ.ວັດນາກ,<br>ມ. ສີສັດຕະນາກ<br>ນະຄອນຫຼວງວຽງຈັນ<br>(021)350497,<br>312422.<br>ແຟັກ:(021)312421 | ເຕັກໂນໂລຊີກົນຈັກ | | | ⊙ |
| | | ກະສິກຳ-ປ່າໄມ້ | | | ⊙ |
| | | ບໍລິຫານທຸລະກິດ | | | ⊙ |
| | | ໄຟຟ້າ-ເອເລັກໂຕຣນິກ | | | ⊙ |
| | | ກໍ່ສ້າງ-ເຄຫະສະຖານ | | | ⊙ |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ທັກສະຊັ້ນຕົ້ນ | ທັກສະຊັ້ນກາງ | ທັກສະຊັ້ນສູງ |
|---|---|---|---|---|---|
| 7 | ໂຮງຮຽນເຕັກນິກ<br>ແຂວງວຽງຈັນ<br>ບ.ນາເຄືອ ມ.ວຽງຄຳ<br>ຂ.ວຽງຈັນ<br>ໂທ (023)431509 | ຕັດຫຍິບເສື້ອຜ້າ | ⊙ | | |
| | | ຮ້ານອາຫານ-ການໂຮງແຮມ | ⊙ | | |
| | | ຊ່ຳງໄຟຟ້າເຕັກນິກ | ⊙ | ⊙ | |
| | | ກໍ່ສ້ຳງເຄຫະສະຖານ | ⊙ | | |
| | | ປູກຝັ່ງ | ⊙ | ⊙ | |
| | | ລ້ຽງສັດ | ⊙ | ⊙ | |
| | | ປ່ຳໄມ້ | ⊙ | | |
| | | ໄຟຟ້ຳເຕັກນິກ | ⊙ | ⊙ | |
| | | ຊ່ຳງໄມ້ | ⊙ | | |
| | | ການບັນຊີ | ⊙ | ⊙ | |
| | | ຄອມພິວເຕີທຸລະກິດ | ⊙ | ⊙ | |
| | | ບໍລິຫານຄຸ້ມຄອງ (ການເງິນ) | ⊙ | ⊙ | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ |
|---|---|---|---|---|---|
| 8 | ໂຮງຮຽນເຕັກນິກ-ວິຊາຊີບ ສະຫວັນນະເຂດ<br>ບ.ທ່າແຮ່<br>ມ.ໄກສອນພົມວິຫານ<br>ແຂວງ ສະຫວັນນະເຂດ<br>ໂທ (041)212149 | ຊ່າງລິດຍົນ | | ⊙ | |
| | | ຊ່າງໄຟຟ້າ | | ⊙ | |
| | | ຊ່າງຈອດ-ທໍ່ນ້ຳ | | ⊙ | |
| | | ຊ່າງກົນຈັກ | | ⊙ | |
| | | ຊ່າງໄມ້ | | ⊙ | |
| | | ບໍລິຫານທຸລະກິດ | | | ⊙ |
| | | ການບັນຊີ | | | ⊙ |
| | | ສຳຫຼວດ-ຂົວທາງ | | ⊙ | |
| | | ຂົວທາງ | | ⊙ | ⊙ |
| | | ເອເລັກໂຕຣນິກ | | ⊙ | |
| | | ອາຫານ-ການໂຮງແຮມ | | ⊙ | |
| | | ຊ່າງຕັດຫຍິບ | | ⊙ | |
| | | ຊ່າງກໍ່ສ້າງເຄຫະສະຖານ | | | ⊙ |
| 9 | ໂຮງຮຽນເຕັກນິກວິຊາຊີບ ແຂວງບໍລິຄຳໄຊ<br>ບ.ຫ້ວຍຄູນ ມ.ບໍລິຄັນ<br>ຂ.ບໍລິຄຳໄຊ<br>ໂທ(054)790167 | ຊ່າງກໍ່ສ້າງເຄຫະສະຖານ | ⊙ | ⊙ | |
| | | ຊ່າງໄມ້ | ⊙ | | |
| | | ຕັດຫຍິບ | ⊙ | | |
| | | ບໍລິຫານທຸລະກິດ | | ⊙ | |
| | | ປູກຝັ່ງ | | ⊙ | |
| | | ລ້ຽງສັດ | | ⊙ | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫ້ອງສອນ ຊັ້ນຕົ້ນ | ຫ້ອງສອນ ຊັ້ນກາງ | ຫ້ອງສອນ ຊັ້ນສູງ |
|---|---|---|---|---|---|
| 10 | ໂຮງຮຽນເຕັກນິກ-ວິຊາຊີບ ຈຳປາສັກ<br>ບ້ານທ່າສາລາຄຳ, ເມືອງປາກເຊ<br>ແຂວງຈຳປາສັກ<br>ໂທ (031) 212007/213801 | ໄຟຟ້າເຕັກນິກ | | ⊙ | ⊙ |
| | | ເອເລັກໂຕຣນິກ | | ⊙ | ⊙ |
| | | ຄຸ້ມຄອງບໍລິຫານທຸລະກິດ | | ⊙ | ⊙ |
| | | ບັນຊີ | | ⊙ | ⊙ |
| | | ອາຫານ-ການໂຮງແຮມ | ⊙ | ⊙ | |
| | | ຊ່າງສ້ອມແປງລົດຍົນ | ⊙ | ⊙ | |
| | | ຊ່າງໂລຫະ | ⊙ | ⊙ | |
| | | ຕັດຫຍິບ | | ⊙ | |
| | | ເຟີນີເຈີ | | ⊙ | |
| | | ທ່ອງທ່ຽວ | | | ⊙ |
| | | ສ້ອມແປງລົດຈັກ | | ⊙ | |
| | | ຊ່າງກໍ່ສ້າງເຄຫະສະຖານ | | ⊙ | ⊙ |
| 11 | ໂຮງຮຽນເຕັກນິກວິຊາຊີບ ແຂວງອັດຕະປື<br>ບ.ເຊໃຫຍ່, ມ.ສາມັກຄີໄຊ,<br>ຂ.ອັດຕະປື<br>ໂທ(020)5478452 | ຊ່າງກໍ່ສ້າງເຄຫະສະຖານ | | ⊙ | |
| | | ປູກຝັງ | | ⊙ | |
| | | ລ້ຽງສັດ | | ⊙ | |
| | | ອາຫານ-ການໂຮງແຮມ | | ⊙ | |
| | | ຊ່າງຈອດແລະທ່ຳນ້ຳ | | ⊙ | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ |
|---|---|---|---|---|---|
| 12 | ໂຮງຮຽນເຕັກນິກວິຊາຊີບ ຫຼວງພະບາງ<br>ບ.ຄອຍ, ມ.ຫຼວງພະບາງ,<br>ຂ.ຫຼວງພະບາງ<br>ໂທ(856-71)212020 | ຊ່າງກໍ່ສ້າງເຄຫະສະຖານ | ⊙ | ⊙ | ⊙ |
| | | ຊ່າງຈອດແລະທໍ່ນ້ຳ | ⊙ | ⊙ | |
| | | ຊ່າງສ້ອມແປງລົດຍົນ | ⊙ | ⊙ | |
| | | ອາຫານ-ການໂຮງແຮມ | ⊙ | ⊙ | |
| | | ຊ່າງໄມ້ | ⊙ | ⊙ | |
| | | ບໍລິຫານໂຮງແຮມ ແລະ ທ່ອງທ່ຽວ | | ⊙ | ⊙ |
| | | ຄຸ້ມຄອງບໍລິຫານທຸລະກິດ | ⊙ | ⊙ | ⊙ |
| | | ການບັນຊີ | ⊙ | ⊙ | ⊙ |
| | | ຊ່າງໄຟຟ້າ | ⊙ | ⊙ | ⊙ |
| 13 | ໂຮງຮຽນເຕັກນິກວິຊາຊີບ ແຂວງຄຳມ່ວນ<br>ບ.ດອນເຄື່ອນຊ້າງ,<br>ມ.ທ່າແຂກ, ຂ.ຄຳມ່ວນ<br>ໂທ (051)212538/250004 | ຊ່າງເຟີນີເຈີ | | ⊙ | |
| | | ຄອມພິວເຕີເຕັກນິກ | | ⊙ | |
| | | ຄຸ້ມຄອງບໍລິຫານທຸລະກິດ | ⊙ | ⊙ | |
| | | ອາຫານ-ການໂຮງແຮມ | ⊙ | ⊙ | |
| | | ຕັດຫຍິບ | ⊙ | ⊙ | |
| | | ຊ່າງກໍ່ສ້າງເຄຫະສະຖານ | ⊙ | ⊙ | |
| | | ສ້ອມແປງທົ່ວໄປ | | ⊙ | |
| | | ໄຟຟ້າເຕັກນິກ | ⊙ | ⊙ | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ |
|---|---|---|---|---|---|
| 14 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງຫຼວງນ້ຳທາ<br>ບ້ານໂພນສະຫວ່າງ,<br>ເມືອງຫຼວງນ້ຳທາ,<br>ແຂວງຫຼວງນ້ຳທາ<br>ໂທ (030)5111041 | ອາຫານ-ການໂຮງແຮມ<br>ແລະທ່ອງທ່ຽວ | | ⊙ | |
| | | ປູກຝັງ | | ⊙ | |
| | | ລ້ຽງສັດ | | ⊙ | |
| | | ສ້ອມແປງທົ່ວໄປ | | ⊙ | |
| | | ໄຟຟ້າ | | ⊙ | |
| | | ຊ່າງກໍ່ສ້າງເຄຫະ<br>ສະຖານ | | ⊙ | |
| 15 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງຜົ້ງສາລີ<br>ມ.ບຸນເໜືອ,<br>ແຂວງຜົ້ງສາລີ<br>ໂທ(020)55787116 | ກະສິກຳ<br>(ປູກຝັງ+ລ້ຽງສັດ) | | ⊙ | |
| | | ບໍລິການການທ່ອງທ່ຽວ<br>-ໂຮງແຮມ | | ⊙ | |
| | | ສ້ອມແປງທົ່ວໄປ | | ⊙ | |
| | | ຊ່າງໄມ້ | | ⊙ | |
| | | ກໍ່ສ້າງເຄຫະສະຖານ | | ⊙ | |
| 16 | ໂຮງຮຽນເຕັກນິກ-<br>ວິຊາຊີບບໍ່ແກ້ວ<br>ບ້ານປາກງາວ,<br>ເມືອງຫ້ວຍຊາຍ<br>ແຂວງບໍ່ແກ້ວ<br>ໂທ(084)211451 | ບໍລິຫານທຸລະກິດ | | ⊙ | |
| | | ປູກຝັງ | | ⊙ | |
| | | ລ້ຽງສັດ | | ⊙ | |
| | | ກໍ່ສ້າງເຄຫະສະຖານ | | ⊙ | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ |
|---|---|---|---|---|---|
| 17 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງໄຊຍະບູລີ<br>ບ.ສວນ ມ.ໄຊຍະບູລີ<br>ຂ.ໄຊຍະບູລີ<br>ໂທ(074)211051 | ບໍລິຫານທຸລະກິດ | | ⊙ | |
| | | ບໍລິຫານການທ່ອງທ່ຽວ-ການໂຮງແຮມ | | ⊙ | |
| | | ກະສິກຳ<br>(ປູກຝັງ+ລ້ຽງສັດ) | | ⊙ | |
| | | ຊ່າງກໍ່ສ້າງເຄຫະສະຖານ | | ⊙ | |
| | | ຕັດຫຍິບ | | ⊙ | |
| 18 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງຫົວພັນ<br>ບ.ຫາງລ້ອງ<br>ມ.ວຽງໄຊ ຂ.ຫົວພັນ<br>ໂທ(030)5160189 | ປູກຝັງ | | ⊙ | |
| | | ລ້ຽງສັດ | | ⊙ | |
| | | ອາຫານ-ການໂຮງແຮມ | | ⊙ | |
| | | ຕັດຫຍິບ | ⊙ | | |
| | | ສ້ອມແປງທົ່ວໄປ | | ⊙ | |
| | | ໄຟຟ້າ | | ⊙ | |
| | | ກໍ່ສ້າງເຄຫະສະຖານ | | ⊙ | |
| 19 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງອຸດົມໄຊ<br>ບ.ບໍ່ ມ.ໄຊ ຂ.ອຸດົມໄຊ<br>ໂທ(081)212267,<br>212246 | ຊ່າງກໍ່ສ້າງ | | ⊙ | |
| | | ຊ່າງໄມ້ | | ⊙ | |
| | | ຊ່າງໄຟຟ້າ | | ⊙ | |
| | | ຊ່າງສ້ອມແປງລົດຍົນ | | ⊙ | |
| | | ປູກຝັງ+ລ້ຽງສັດ | | ⊙ | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ທັກສະຊັ້ນຕົ້ນ | ທັກສະຊັ້ນກາງ | ທັກສະຊັ້ນສູງ |
|---|---|---|---|---|---|
| 20 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງຊຽງຂວາງ<br>ບ.ລໍ້ ມ.ແປກ<br>ຂ.ຊຽງຂວາງ<br>ໂທ(061)213296 | ລ້ຽງສັດ | | ⊙ | |
| | | ປູກຝັງ | | ⊙ | |
| | | ຕັດຫຍິບ | ⊙ | ⊙ | |
| | | ອາຫານ-ການໂຮງແຮມ | ⊙ | ⊙ | |
| | | ຊ່າງໄຟຟ້າ | | ⊙ | |
| | | ຊ່າງສ້ອມແປງລົດຍົນ | | ⊙ | |
| | | ຊ່າງກໍ່ສ້າງ | | ⊙ | |
| | | ຊ່າງໄມ້ | | ⊙ | |
| 21 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງເຊກອງ<br>ບ.ໂມ ມ.ລະມາມ<br>ຂ.ເຊກອງ<br>ໂທ(856-20)5638176 | ຊ່າງໄຟຟ້າ | | ⊙ | |
| | | ກະສິກຳ<br>(ປູກຝັງ+ລ້ຽງສັດ) | | ⊙ | |
| | | ກໍ່ສ້າງ | | ⊙ | |
| 22 | ໂຮງຮຽນວິຊາຊີບ<br>ແບບປະສົມ<br>ແຂວງສາລະວັນ<br>ບ້ານ ຂີວເສັດ<br>ເມືອງ ເລົ່າງາມ<br>ແຂວງ ສາລະວັນ<br>ໂທ:(034)211892 | ກໍ່ສ້າງ | | ⊙ | |
| | | ປູກຝັງລ້ຽງສັດ | | | |
| | | ອາຫານ-ການ<br>ໂຮງແຮມ | | ⊙ | |
| | | ໄຟຟ້າ | | ⊙ | |
| | | | | ⊙ | |

# ມະຫາວິທະຍາໄລ ໃນ ສປປ ລາວ

ປະຈຸບັນ ໃນປະເທດຂອງເຮົາມີ ມະຫາວິທະຍາໄລ 5 ແຫ່ງ ຄື: ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ມະຫາວິທະຍາໄລສຸພານຸວົງ ມະຫາວິທະຍາໄລສະຫວັນນະເຂດ ແລະ ມະຫາວິທະຍາໄລຈຳປະສັກ.

ແຕ່ລະມະຫາວິທະຍາໄລ ມີຫຼາຍວິຊາການໃຫ້ເລືອກຮຽນ ໂດຍແຍກໄປຕາມ **ຄະນະວິຊາ**. ມະຫາວິທະຍາໄລໜຶ່ງໆ ມີຫຼາຍຄະນະວິຊາ ເຊິ່ງສຳຫັບເປັນຫຼາຍໂຮງຮຽນ ຕັ້ງຢູ່ເຂດດຽວກັນ ຫຼື ໃກ້ກັນ. ໃນແຕ່ລະຄະນະວິຊາ ຍັງແບ່ງເປັນ**ພາກວິຊາ** ເຊິ່ງເປັນບ່ອນສັງກັດ ຂອງຄູອາຈານທີ່ສອນວິຊາສະເພາະຕ່າງໆ.

ສ່ວນປະກອບ ຂອງແຕ່ລະມະຫາວິທະຍາໄລ ມີດັ່ງນີ້:

I. ມະຫາວິທະຍາໄລແຫ່ງຊາດ ຕັ້ງຢູ່ 4 ເຂດ ຂອງນະຄອນຫຼວງວຽງຈັນ ປະກອບມີ 11 ຄະນະວິຊາ:

1. ຄະນະວິທະຍາສາດທຳມະຊາດ (ຕັ້ງຢູ່ ເຂດດົງໂດກ) ປະກອບມີ 5 ພາກວິຊາ ຄື:
   - 1.1. ພາກວິຊາ ຄະນິດສາດ
   - 1.2. ພາກວິຊາ ວິທະຍາສາດຄອມພິວເຕີ
   - 1.3. ພາກວິຊາ ຟີຊິກສາດ
   - 1.4. ພາກວິຊາ ເຄມີສາດ
   - 1.5. ພາກວິຊາ ຊີວະວິທະຍາ
2. ຄະນະວິສະວະກຳສາດ (ຕັ້ງຢູ່ເຂດໂສກປ່າຫຼວງ) ປະກອບດ້ວຍ 8 ພາກວິຊາ
   - 2.1. ພາກວິຊາ ວິສະວະກຳກໍ່ສ້າງ
   - 2.2. ພາກວິຊາ ວິສະວະກຳກົນຈັກ
   - 2.3. ພາກວິຊາ ວິສະວະກຳໄຟຟ້າ
   - 2.4. ພາກວິຊາ ເອເລັກໂຕນິກ ແລະ ໂທລະຄົມມະນາຄົມ
   - 2.5. ພາກວິຊາ ຄົມມະນາຄົມຂົນສົ່ງ
   - 2.6. ພາກວິຊາ ວິສະວະກຳ ຊັບພະຍາກອນນ້ຳ

2.7. ພາກວິຊາ ວິສະວະກຳ ໄອທີ
2.8. ພາກວິຊາ ຄູອາຊີວະສຶກສາ

3. ຄະນະ ສະຖາປັດຕະຍະກຳສາດ (ຕັ້ງຢູ່ເຂດດົງໂດກ) ປະກອບມີ 3 ພາກວິຊາ ຄື:
   3.1. ພາກວິຊາ ສະຖາປັດ
   3.2. ພາກວິຊາ ອອກແບບຜັງເມືອງ
   3.3. ພາກວິຊາ ເຕັກໂນໂລຊີການກໍ່ສ້າງ
4. ຄະນະປ່າໄມ້ (ຕັ້ງຢູ່ເຂດດົງໂດກ) ປະກອບມີ 3 ພາກວິຊາ ຄື:
   4.1. ພາກວິຊາ ອຸດສະຫະກຳປ່າໄມ້
   4.2. ພາກວິຊາຄຸ້ມຄອງຈັດສັນປ່າໄມ້
   4.3. ພາກວິຊາຈັດສັນອ່າງໂຕ່ງ ແລະ ວາງແຜນນຳໃຊ້ທີ່ດິນ
5. ຄະນະກະເສດສາດ (ຕັ້ງຢູ່ເຂດນາບົງ) ປະກອບມີ 3 ພາກວິຊາ ຄື:
   5.1. ພາກວິຊາ ປູກພືດ
   5.2. ພາກວິຊາ ລ້ຽງສັດ ແລະ ການປະໂມງ
   5.3. ພາກວິຊາເສດຖະກິດຊົນນະບົດແລະປຸງແຕ່ງ
6. ຄະນະວິທະຍາສາດສັງຄົມ (ຕັ້ງຢູ່ເຂດດົງໂດກ) ປະກອບມີ 4 ພາກວິຊາ ຄື:
   6.1. ພາກວິຊາ ພູມສາດ
   6.2. ພາກວິຊາ ປະຫວັດສາດ ແລະບູຮານວິທະຍາ
   6.3. ພາກວິຊາ ວິທະຍາສາດການເມືອງ
   6.4. ພາກວິຊາທ່ອງທ່ຽວແລະໂຮງແຮມ
   6.5 ພາກວິຊາສັງຄົມສົງເຄາະ ແລະພັດທະນາຊົນນະບົດ
7. ຄະນະອັກສອນສາດ (ຕັ້ງຢູ່ເຂດດົງໂດກ)
   7.1. ພາກວິຊາ ພາສາລາວ ແລະ ສື່ສານມວນຊົນ
   7.2. ພາກວິຊາ ພາສາອັງກິດ
   7.3. ພາກວິຊາ ພາສາຝຣັ່ງ
   7.4. ພາກວິຊາ ພາສາຫວຽດນາມ
   7.5. ພາກວິຊາ ພາສາຍີ່ປຸ່ນ
   7.6. ພາກວິຊາ ພາສາເຢຍລະມັນ
   7.7. ພາກວິຊາ ພາສາຈີນ

7.8. ພາກວິຊາ ພາສາລັດເຊຍ
7.9. ພາກວິຊາ ພາສາເກົາຫຼີ
7.10. ພາກວິຊາ ພາສາແອັດສະປາຍ

8. ຄະນະສຶກສາສາດ (ຕັ້ງຢູ່ເຂດດົງໂດກ) ປະກອບມີ 5 ພາກວິຊາ ຄື:
8.1. ພາກວິຊາ ຄູສາຍທຳມະຊາດ
8.2. ພາກວິຊາ ຄູສາຍສັງຄົມ
8.3. ພາກວິຊາ ບໍລິຫານການສຶກສາ
8.4. ພາກວິຊາ ຈິດຕະສາດການສຶກສາ
8.5. ພາກວິຊາ ຄູພາສາຕ່າງປະເທດ
8.6. ພາກວິຊາ ຄູພາສາລາວ
8.7. ພາກວິຊາ ຄູພະລະສຶກສາ
9. ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຕັ້ງຢູ່ເຂດດົງໂດກ) ປະກອບ ມີ 2 ພາກວິຊາ ຄື:
9.1. ພາກວິຊາ ເສດຖະສາດ
9.2. ພາກວິຊາ ບໍລິຫານທຸລະກິດ
10. ຄະນະນິຕິສາດ-ລັດຖະສາດ (ຕັ້ງຢູ່ເຂດດອນນົກຂຸ້ມ) ປະກອບດ້ວຍ 3 ພາກວິຊາ ຄື:
10.1. ພາກວິຊາ ນິຕິສາດ
10.2. ພາກວິຊາ ລັດຖະສາດ
10.3. ພາກວິຊາ ການພົວພັນຕ່າງປະເທດ
11. ຄະນະວິທະຍາສາດສິ່ງແວດລ້ອມ (ຕັ້ງຢູ່ເຂດດົງໂດກ) ປະກອບດ້ວຍ 2 ພາກວິຊາ ຄື:
11.1. ພາກວິຊາ ວິທະຍາສາດສິ່ງແວດລ້ອມ
11.2. ພາກວິຊາ ຈັດການສິ່ງແວດລ້ອມ

II. ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ຕັ້ງຢູ່ ນະຄອນຫຼວງວຽງຈັນ, ເຂດຕະຫຼາດເຊົ້າ ແລະເຂດທາດດຳ ປະກອບ ມີ 7 ຄະນະວິຊາ ດັ່ງນີ້:

1. ຄະນະແພດສາດ
2. ຄະນະທັນຕະແພດ
3. ຄະນະເພຊະສາດ

4. ຄະນະພະຍາບານສາດ
5. ຄະນະເຕັກນິກການແພດ
6. ຄະນະວິທະຍາສາດການແພດພື້ນຖານ
7. ຄະນະການສຶກສາເໜືອປະລິນຍາຕີ

III. ມະຫາວິທະຍາໄລ ສຸພານຸວົງ ຕັ້ງຢູ່ 2 ເຂດ ຂອງເມືອງຫຼວງພະບາງ, ແຂວງຫຼວງພະບາງ ປະກອບມີ 6 ຄະນະວິຊາດັ່ງນີ້:

1. ຄະນະກະເສດສາດແລະຊັບພະຍາກອນປ່າໄມ້ (ຕັ້ງຢູ່ເຂດບ້ານດອນໃໝ່) ປະກອບດ້ວຍ 4 ພາກວິຊາ ຄື:
   1.1. ສັດຕະວະສາດ
   1.2. ພືດສາດ
   1.3. ຊັບພະຍາກອນປ່າໄມ້
   1.4. ວິທະຍາສາດ ແລະເຕັກໂນໂລຊີອາຫານ
2. ຄະນະສະຖາປັດຕະຍະກຳສາດ (ຕັ້ງຢູ່ເຂດບ້ານດອນໃໝ່) ປະກອບດ້ວຍ 2 ພາກວິຊາ:
   2.1. ພາກວິຊາສະຖາປັດ
   2.2. ພາກວິຊາຕົບແຕ່ງພາຍໃນ
3. ຄະນະເສດຖະສາດແລະການທ່ອງທ່ຽວ (ຕັ້ງຢູ່ເຂດບ້ານດອນໃໝ່ ) ປະກອບດ້ວຍ 5 ພາກວິຊາ:
   3.1. ພາກວິຊາ ຄຸ້ມຄອງທຸລະກິດ ໄອທີ
   3.2. ພາກວິຊາ ຄຸ້ມຄອງທຸລະກິດຕ່າງປະເທດ
   3.3. ພາກວິຊາ ເສດຖະສາດ
   3.4. ພາກວິຊາ ຄຸ້ມຄອງການທ່ອງທ່ຽວ
   3.5. ພາກວິຊາ ຄຸ້ມຄອງທຸລະກິດທົ່ວໄປ
4. ຄະນະສຶກສາສາດ (ຕັ້ງຢູ່ເຂດບ້ານນາສັງເທວີ) ປະກອບດ້ວຍ 3 ພາກວິຊາ
   4.1. ພາກວິຊາ ພາສາອັງກິດ
   4.2. ພາກວິຊາ ຄະນິດສາດ
   4.3. ພາກວິຊາ ພາສາລາວ
5. ຄະນະວິສະວະກຳສາດ (ຕັ້ງຢູ່ເຂດບ້ານດອນໃໝ່) ປະກອບດ້ວຍ 3

ພາກວິຊາ ຄື:

5.1. ພາກວິຊາ ວິສະວະກຳ ໄຟຟ້າ

5.2. ພາກວິຊາ ວິສະວະກຳ ຄອມພິວເຕີ

5.3. ພາກວິຊາ ວິສະວະກຳໂຍທາ

6. ຄະນະພາສາສາດ (ຕັ້ງຢູ່ເຂດບ້ານດອນໃໝ່) ປະກອບດ້ວຍ 2 ພາກວິຊາ ຄື:

6.1. ພາກວິຊາ ພາສາອັງກິດ

6.2. ພາກວິຊາ ພາສາລາວ

IV. ມະຫາວິທະຍາໄລ ຈຳປາສັກ ຕັ້ງຢູ່ ເມືອງປາກເຊ ແຂວງຈຳປາສັກ, ປະກອບມີ 5 ຄະນະວິຊາ ດັ່ງນີ້:

1. ຄະນະວິສະວະກຳສາດ ປະກອບດ້ວຍ 2 ພາກວິຊາ ຄື:
   1.1. ພາກວິຊາ ວິສະວະກຳໄຟຟ້າ
   1.2. ພາກວິຊາ ວິສະວະກຳໂຍທາ
2. ຄະນະເສດຖະສາດແລະການຄຸ້ມຄອງ, ປະກອບດ້ວຍ 3 ພາກວິຊາ ຄື:
   2.1. ພາກວິຊາ ເສດຖະສາດ
   2.2. ພາກວິຊາ ຄຸ້ມຄອງ
   2.3. ພາກວິຊາ ການທ່ອງທ່ຽວ ແລະ ບໍລິການ
3. ຄະນະສຶກສາສາດ, ປະກອບມີ 3 ພາກວິຊາ ຄື:
   3.1. ພາກວິຊາ ພາສາອັງກິດ
   3.2. ພາກວິຊາ ພາສາລາວແລະວັນນະຄະດີ
   3.3. ພາກວິຊາ ຄະນິດສາດ
4. ຄະນະກະເສດສາດ, ປະກອບມີ 2 ພາກວິຊາ ຄື:
   4.1. ພາກວິຊາ ກະເສດສາດ
   4.2. ພາກວິຊາ ລ້ຽງສັດ
5. ຄະນະນິຕິສາດ ແລະ ລັດຖະສາດ, ປະກອບດ້ວຍ 2 ພາກວິຊາ ຄື:
   5.1. ພາກວິຊາ ນິຕິສາດ
   5.2. ພາກວິຊາ ລັດຖະສາດ

V. ມະຫາວິທະຍາໄລ ສະຫວັນນະເຂດ ຕັ້ງຢູ່ເມືອງ ໄກສອນ ພົມວິຫານ, ແຂວງສະຫວັນນະເຂດ, ປະກອບດ້ວຍ 3 ຄະນະວິຊາ ດັ່ງນີ້:

1. ຄະນະກະເສດສາດ ແລະວິທະຍາສາດສິ່ງແວດລ້ອມ ທີ່ປະກອບດ້ວຍ ຫຼັກສູດ:
    1.1. ກະເສດສາດ
    1.2. ລ້ຽງສັດ
    1.3. ວິທະຍາສາດສິ່ງແວດລ້ອມ
2. ຄະນະຄຸ້ມຄອງທຸລະກິດ ທີ່ປະກອບດ້ວຍ ຫຼັກສູດ:
    2.1. ການຄ້າ
    2.2. ການຂົນສົ່ງ ແລະ ຄຸ້ມຄອງໂລຊິສະຕິກ
    2.3. ການໂຮງແຮມ ແລະ ການຄຸ້ມຄອງການທ່ອງທ່ຽວ
3. ຄະນະອັກສອນສາດ ປະກອບດ້ວຍຫຼັກສູດ:
    3.1. ພາສາອັງກິດ
    3.2. ພາສາຝຣັ່ງ

**ໝາຍເຫດ:**
ແຕ່ລະມະຫາວິທະຍາໄລ ມີການຂະຫຍາຍຕົວຕະຫຼອດເວລາ ສະນັ້ນ ຖ້ານັກຮຽນຕ້ອງການຮູ້ຈັກຂໍ້ມູນໃໝ່ຫຼ້າສຸດ ຄວນຕິດຕໍ່ໂດຍກົງກັບມະຫາວິທະຍາໄລ ກ່ຽວຂ້ອງອີກຕື່ມ.

24/VII
ຫ້າມຈຳໜ່າຍ

# ວິທະຍາໄລຄູ ໃນ ສປປລາວ

ນອກຈາກ ເຂົ້າຮຽນ ຄະນະສຶກສາສາດ ໃນມະຫາວິທະຍາໄລ ແລ້ວ, ນັກຮຽນທີ່ຢາກຮຽນຕໍ່ເປັນຄູ ຍັງສາມາດສະໝັກຮຽນ ທີ່ວິທະຍາໄລຄູ ທີ່ມີທັງໝົດ 8 ແຫ່ງ ໃນທົ່ວປະເທດ. ໃນວິທະຍາໄລຄູ ມີຫຼັກສູດ ຄູອານຸບານ, ຫຼັກສູດຄູປະຖົມ ແລະ ຫຼັກສູດຄູມັດທະຍົມຕອນຕົ້ນ. ໃນໄລຍະຫຼັງນີ້ ເພື່ອສົ່ງເສີມການຮຽນຄູ, ເພີ່ນ ໄດ້ສະໜອງເບ້ຍລ້ຽງ ໃຫ້ນັກຮຽນຄູໝົດທຸກຄົນຈົນຮຽນຈົບ.

1. ວິທະຍາໄລຄູ ດົງຄຳຊ້າງ, ຕັ້ງຢູ່ ບ້ານດົງຄຳຊ້າງ ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ
2. ວິທະຍາໄລຄູ ບ້ານເກີນ, ຕັ້ງຢູ່ ບ້ານເກີນ, ເມືອງທຸລະຄົມ, ແຂວງວຽງຈັນ
3. ວິທະຍາໄລຄູ ຫຼວງນ້ຳທາ ຕັ້ງຢູ່ ບ້ານຂອນ, ເມືອງນ້ຳທາ ແຂວງຫຼວງນ້ຳທາ
4. ວິທະຍາໄລຄູ ຫຼວງພະບາງ ຕັ້ງຢູ່ ບ້ານນາສັງເທວີ, ເມືອງແລະແຂວງຫຼວງພະບາງ
5. ວິທະຍາໄລຄູຄັງໄຂ ຕັ້ງຢູ່ ບ້ານຄັງໄຂ, ເມືອງແປກ, ແຂວງຊຽງຂວາງ
6. ວິທະຍາໄລຄູສະຫວັນນະເຂດ ຕັ້ງຢູ່ບ້ານຫຼັກ 7, ແຂວງສະຫວັນນະເຂດ
7. ວິທະຍາໄລຄູສາລະວັນ ຕັ້ງຢູ່ບ້ານ... ເມືອງ ແລະແຂວງສາລະວັນ
8. ວິທະຍາໄລຄູປາກເຊ, ຕັ້ງຢູ່ບ້ານໂຊກອຳນວຍ, ເມືອງປາກເຊ ແຂວງຈຳປະສັກ.

# ລະບຽບການ ສະໝັກເຂົ້າຮຽນ

ປະມານ ເດືອນມິຖຸນາ (6) ຫາ ເດືອນກໍລະກົດ(7) ຂອງ ແຕ່ລະປີ ສະຖາບັນການສຶກສາຕ່າງໆຂອງລັດ ຈະປະກາດຮັບ ນັກຮຽນ ໂດຍຜ່ານວິທະຍຸ ໂທລະພາບ ແລະ ໜັງສືພິມ ແລະ ປະມານ ເດືອນສິງຫາ (8) ແລະ ເດືອນກັນຍາ (9) ສະຖາບັນ ການສຶກສາ ຂອງພາກເອກະຊົນ ກໍຈະປະກາດຮັບນັກຮຽນເຊັ່ນ ດຽວກັນ. ນັກຮຽນທີ່ສົນໃຈສະໝັກຮຽນ ຕ້ອງເອົາໃຈໃສ່ຕິດຕາມ ຂ່າວສານ ໃນໄລຍະນີ້.

ສ່ວນຫຼາຍແລ້ວ ໃນປະກາດນັ້ນ ເພິ່ນຈະບອກໃຫ້ໄປຊື້ ຄຳຮ້ອງສະໝັກຢູ່ບ່ອນທີ່ ນັກຮຽນຢາກໄປຮຽນ. ເມື່ອໄປເອົາ ຄຳຮ້ອງມາແລ້ວ ຕ້ອງປະກອບເອກະສານໃຫ້ຄົບຖ້ວນຕາມເພິ່ນ ແນະນຳ ແລ້ວເອົາໄປຍື່ນກ່ອນເວລາ ທີ່ເພິ່ນກຳນົດປິດຮັບ. ຖ້າ ນັກຮຽນຕິດຕາມການປະກາດ ຈະສັງເກດວ່າ ແຕ່ລະສະຖາບັນ ຈະສອບເສັງຄັດເລືອກ ໃນມື້ແຕກຕ່າງກັນ. ນັ້ນໝາຍຄວາມວ່າ ນັກຮຽນສາມາດໄປສະໝັກເສັງຢູ່ຫຼາຍສະຖາບັນ.

## ການເຂົ້າຮຽນໂຮງຮຽນອາຊີວະສຶກສາ

ສຳລັບປີ 2011 ຜ່ານມາ ກະຊວງສຶກສາ ໄດ້ອອກຄຳສັ່ງ ແນະນຳ ໃນວັນທີ 13 ມິຖຸນາ 2011 ເລື່ອງ ການຄັດເລືອກເອົາ ນັກຮຽນ-ນັກສຶກສາ ເຂົ້າຮຽນ ໃນສະຖານອາຊີວະສຶກສາແຫ່ງ ຕ່າງໆ ໃນສົກຮຽນ 2011-12 ໂດຍມີນະໂຍບາຍໂດຍຫຍໍ້ດັ່ງນີ້:

1. ນັກຮຽນທີ່ສະໝັກເຂົ້າຮຽນ ລະດັບວິຊາຊີບຊຳນານງານ (9+3) ລະດັບຊ່າງເຕັກນິກ (12+2) ໃນສາຂາອາຊີບ ຕໍ່ລົງໄປນີ້ ບໍ່ຕ້ອງ ສອບເສັງເຂົ້າ ມີແຕ່ເຂົ້າສຳພາດນຳຄະນະກຳມະການຄັດເລືອກ ເທົ່ານັ້ນ ແລະ ນອກຈາກນີ້ ຍັງຈະໄດ້ຮັບເບ້ຶຽລ້ຶງຂອງລັດຖະບານ:

- ຊ່າງກໍ່ສ້າງເຄຫະສະຖານ
- ຊ່າງໄມ້
- ປຸງແຕ່ງອາຫານ
- ຊ່າງຕັດຫຍິບ
- ຊ່າງຈັກກົນ
- ຊ່າງຈອດແລະຊ່າງທໍ່ນ້ຳ
- ກະສິກຳ (ປູກຝັ່ງ, ລ້ຶງສັດ)
- ປ່າໄມ້
- ຊ່າງຂົວທາງ
- ຄູອາຊີວະສຶກສາ

2. ສຳລັບເຂົ້າຮຽນ ວິຊາຊີບທີ່ບໍ່ໄດ້ບົ່ງໄວ້ໃນຂໍ້ 1, ຕ້ອງເຂົ້າສອບເສັງຄັດເລືອກ, ແລະ ເມື່ອໄດ້ເຂົ້າຮຽນ ກໍບໍ່ໄດ້ຮັບເບ້ຶຽລ້ຶງ.

3. ນັກຮຽນຕໍ່ໄປນີ້ ຈະໄດ້ຮັບນະໂຍບາຍພິເສດ ຄື ໄດ້ຮັບການອຸດໜູນເບ້ຶຽລ້ຶງ ໂດຍບໍ່ຈຳແນກສາຂາວິຊາຊີບ:

- ນັກຮຽນຊົນເຜົ່າສ່ວນນ້ອຍ ທີ່ມີຖານະຄອບຄົວທຸກຍາກ
- ຜູ່ທຸກຍາກ ທີ່ມາຈາກເຂດຫ່າງໄກສອກຫຼີກ,
- ນັກຮຽນເກ່ັງ ຫຼື ນັກຮຽນພອນສະຫວັນພິເສດ
- ລູກ ຫຼື ຫຼານ ຂອງຜູ່ທີ່ມີຄຸນຄວາມດີ ແລະ ມີຜົນງານດີເດ້ັນຕໍ່ປະເທດຊາດ

4. ການຈັດສອບເສັງ ແລະ ສຳພາດ ແມ່ນຈັດຢູ່ ໂຮງຮຽນ ອາຊີວະສຶກສາແຕ່ລະບ່ອນ. ນັກຮຽນຕ້ອງຕິດຕາມ ປະກາດແຈ້ງ ການໃຫ້ດີ.

<u>ການເຂົ້າຮຽນ ມະຫາວິທະຍາໄລ</u>

ການສອບເສັງເຂົ້າ ມະຫາວິທະຍາໄລແຫ່ງຊາດ (ມຊ) ມະຫາວິທະຍາໄລ ຈຳປາສັກ (ມຈ) ມະຫາວິທະຍາໄລ ສຸພານຸວົງ(ມສ) ແລະ ມະຫາວິທະຍາໄລ ສະຫວັນນະເຂດ (ມຂ) ແມ່ນຈັດຂຶ້ນພ້ອມກັນ ຢູ່ໝົດທຸກແຂວງ ຂອງ ສປປ ລາວ ໂດຍ ແມ່ນຄະນະກຳມະການສອບເສັງລະດັບຊາດ ເປັນຜູ້ຮັບຜິດ ຊອບ. ນັກຮຽນ ທີ່ດຳລົງຊີວິດຢູ່ແຂວງ ທີ່ບໍ່ແມ່ນທີ່ຕັ້ງ ຂອງມະຫາ ວິທະຍາໄລ ສາມາດໄປຊື້ຄຳຮ້ອງ ຢູ່ພະແນກສຶກສາແຂວງ ຂອງ ຕົນເອງ.

ການສອບເສັງເຂົ້າ ມະຫາວິທະຍາໄລ ວິທະຍາສາດສຸຂະ ພາບ ຈັດຂຶ້ນໃນ ເວລາຕ່າງກັນກັບ ມະຫາວິທະຍາໄລອື່ນ.

ໃນປີ 2011 ຜ່ານມາ ເພີ່ນໄດ້ຈັດສອບເສັງ ຢູ່ 7 ແຂວງຄື: ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ, ແຂວງຫຼວງພະບາງ, ແຂວງ ຊຽງຂວາງ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ. ບ່ອນຂາຍຄຳຮ້ອງ ແມ່ນຢູ່ມະຫາວິທະ ຍາໄລເອງ, ຢູ່ວິທະຍາໄລ ວິທະຍາສາດສຸຂະພາບ ຂອງແຂວງ, ຢູ່ ໂຮງຮຽນສາທາລະນະສຸກແຂວງ ແລະ ຢູ່ ພະແນກ ສາທາ ລະນະສຸກ ຂອງແຂວງ ສຳລັບແຂວງ ທີ່ບໍ່ມີສູນສອບເສັງ. ການສອບເສັງເຂົ້າວິທະຍາໄລວິທະຍາສາດສຸຂະພາບ ແລະ ໂຮງຮຽນສາທາລະນະສຸກ ຕ່າງໆ ກໍຈັດໃນມື້ດຽວກັນນັ້ນ ເລີຍ.

# ການເລືອກອາຊີບ

ເມື່ອຮຽນຈະຈົບມັດທະຍົມຕອນປາຍ ນັກຮຽນຕ້ອງ ໄດ້ຄຶດ ກ່ຽວກັບ ອາຊີບທີ່ຕົນເອງມັກ. ບາງຄົນກໍຄຶດມາແຕ່ ດົນແລະໄດ້ເລືອກອາຊີບໄວ້ ໃນໃຈແລ້ວ ແຕ່ບາງຄົນ ກໍຍັງ ບໍ່ຕັດສິນໃຈ ປ່ອຍໃຫ້ເປັນພາລະຂອງພໍ່ ແມ່ ຜູ້ປົກຄອງ ຕັດສິນໃຈໃຫ້ແທນ.

ການເລືອກອາຊີບ ກ່ຽວຂ້ອງກັບນັກຮຽນທຸກຄົນ, ຈະ ແມ່ນຜູ້ຈະໄປເຮັດວຽກ ຫຼື ຜູ້ຈະໄປຮຽນຕໍ່ ເພາະວ່າ ການຮຽນ ຕໍ່ກໍ່ຕ້ອງໄດ້ເລືອກໃຫ້ ຖືກກັບອາຊີບທີ່ຕ້ອງການຢາກເຮັດໃນ ອະນາຄົດ.

ບ່ອນອີງສຳລັບເລືອກອາຊີບຂອງແຕ່ລະຄົນບໍ່ຄືກັນ. ສາມາດ ແຍກໄດ້ເປັນ 4 ກຸ່ມຕົ້ນຕໍ ດັ່ງລຸ່ມນີ້:

1. ບາງຄົນເອົາລາຍຮັບ ເປັນຕົວຕັ້ງ, ໝາຍຄວາມວ່າ ຕ້ອງການ ປະກອບອາຊີບທີ່ມີລາຍຮັບສູງ. ສະນັ້ນ ຈະຕ້ອງໄດ້ຊອກຮູ້ ລາຍລະອຽດກ່ຽວກັບວ່າ ເພິ່ນ ເຮັດຫຍັງໃນອາຊີບນັ້ນ ຈຶ່ງມີລາຍຮັບສູງ.

2. ບາງຄົນເອົາຄອບຄົວເປັນຕົວຕັ້ງ, ໝາຍຄວາມວ່າ ເຫັນພໍ່ແມ່ ປະກອບອາຊີບໃດ ກໍມັກອາຊີບນັ້ນ ເພາະວ່າ ຮູ້ລາຍລະອຽດ ຂອງອາຊີບນັ້ນດີຢູ່ແລ້ວ ຈຶ່ງມີຄວາມໝັ້ນໃຈວ່າ ຈະເຮັດໄດ້.

3. ບາງຄົນເອົາຄວາມມີອຳນາດ ມີກຽດໃນສັງຄົມ ເປັນໂຕຕັ້ງ ສະນັ້ນ ຈະສົນໃຈວຽກງານຂອງລັດ ເຖິງຈະມີລາຍຮັບບໍ່ຫຼາຍ ເທົ່າກັບອາຊີບທຸລະກິດ ກໍຕາມ.

4. ບາງຄົນ ກໍຄຶດຢາກປະກອບອາຊີບທີ່ໄດ້ຊ່ວຍເຫຼືອຄົນໂດຍກົງ: ຊ່ວຍໃຫ້ມີການສຶກສາ, ຊ່ວຍໃຫ້ຫາຍເຊື້ອຈາກພະຍາດ, ຊ່ວຍຊີວິດຄົນ, ຊ່ວຍໃຫ້ຄົນມີຄວາມສະຫງົບປອດໄພ ເປັນຕົ້ນ.

ສຳລັບຄົນທີ່ເລືອກອາຊີບທຸລະກິດ ຕ້ອງໄດ້ຄຳນຶງເຖິງທຶນຮອນ, ການແຂ່ງຂັນ ແລະຄວາມໝັ້ນຄົງຂອງອາຊີບນັ້ນ. ອາຊີບທຸລະກິດອາດ ແບ່ງເປັນສອງຂະແໜງການໃຫຍ່: ຂະແໜງການຜະລິດ ແລະ ຂະແໜງ ການຄ້າ-ບໍລິການ. ສ່ວນຫຼາຍແລ້ວ ຖ້າອາຊີບທຸລະກິດໃດ ກ່ຽວຂ້ອງກັບ ສີ່ປັດໄຈພື້ນຖານຂອງການດຳລົງຊີວິດຂອງຄົນ ອາຊີບນັ້ນຈະໝັ້ນຄົງ ເພາະວ່າ ຜົນຜະລິດ ຫຼື ການບໍລິການຈາກອາຊີບນັ້ນ ເປັນສິ່ງທີ່ທຸກຄົນ ໃນສັງຄົມຕ້ອງການ ແລະຂາດບໍ່ໄດ້ຢູ່ແລ້ວ.

ເວົ້າໂດຍຫຍໍ້ ສີ່ປັດໄຈພື້ນຖານຂອງການດຳລົງຊີວິດ ແມ່ນ ອາຫານ, ເຄື່ອງນຸ່ງຫົ່ມ, ທີ່ພັກອາໄສ ແລະຢາປົວພະຍາດ. ໃນສັງຄົມເມືອງໃຫຍ່ ຄວາມໝາຍຂອງແຕ່ລະປັດໄຈນັ້ນ ກວ້າງຂວາງຫຼາຍ ແລະກ່ຽວຂ້ອງກັບ ຫຼາກຫຼາຍອາຊີບ. ຕົວຢ່າງ: ອາຫານ ບໍ່ໄດ້ໝາຍຄວາມແຕ່ວ່າ ເຂົ້າກິນ, ຊີ້ນ ປາ ຜັກ ໝາກໄມ້. ມັນຍັງກ່ຽວຂ້ອງກັບ ພາຊະນະໃສ່ອາຫານ, ອຸປະກອນແຕ່ງກິນ ການແຊ່ເຢັນອາຫານ ແລະອື່ນໆ. ທີ່ພັກອາໄສ ກໍ່ບໍ່ແມ່ນ ແຕ່ເຮືອນຢູ່ ຫຼືເຄື່ອງໃຊ້ໃນເຮືອນ ແຕ່ຍັງກວມໄປເຖິງຖະໜົນຫົນທາງ ໄຟຟ້າ ນ້ຳໃຊ້ ພາຫະນະ ການເດີນທາງ ແລະອື່ນໆ. ເຄື່ອງນຸ່ງຫົ່ມ ກໍຮວມທັງການຮັກສາຄວາມສະອາດຮ່າງກາຍ ການແຕ່ງເພດ. ສ່ວນຢາກໍມີຄວາມໝາຍກ່ຽວຂ້ອງເຖິງການຮັກສາສຸຂະພາບ ແລະການປິ່ນປົວພະຍາດ ແລະອື່ນໆ.

ນັກຮຽນຈະເຫັນວ່າ ໃນຂົງເຂດທຸລະກິດ ມີຫຼາຍອາຊີບທີ່ສຸດ. ຕົວເມືອງໃຫຍ່ ຈະຕ້ອງການອາຊີບຫຼາຍປະເພດແຕກຕ່າງກັນ ຫຼາຍກວ່າ ຕົວເມືອງນ້ອຍ ຫຼື ຊົນນະບົດ.

ການເລືອກອາຊີບ ຍັງມີອີກແງ່ໜຶ່ງຄື ພວກເຮົາຈະເລືອກເປັນມະນຸດກິນເງິນເດືອນບໍ່ ຫຼື ຈະເລືອກລ້ຽງຕົນເອງ. ມະນຸດກິນເງິນເດືອນຈະມີ ລາຍຮັບແບບປົກກະຕິ ຮູ້ໄດ້ລ່ວງໜ້າ, ເຊັ່ນ ເປັນພະນັກງານຂອງລັດ ຫຼື ພະນັກງານຂອງບໍລິສັດ ຫຼືໂຮງງານໃຫຍ່. ສ່ວນຄົນທີ່ປະກອບອາຊີບທີ່ ລ້ຽງຕົນເອງ ນັ້ນ ມີລາຍຮັບບໍ່ຄົງທີ່, ບາງເດືອນໄດ້ຫຼາຍ ບາງເດືອນໄດ້ໜ້ອຍ, ບາງຄັ້ງ ນອກຈາກລ້ຽງຕົນເອງແລ້ວຍັງຕ້ອງມີຄວາມຮັບຜິດຊອບ ຕໍ່ການໃຫ້ເງິນເດືອນແກ່ພະນັກງານ ທີ່ເຮັດວຽກໃນຮ້ານໂຮງງານ ຫຼື ບໍລິສັດທີ່ຕົນເອງເປັນເຈົ້າຂອງ. ຄົນທີ່ປະກອບອາຊີບລ້ຽງຕົນເອງ ຫຼືເປັນເຈົ້າຂອງທຸລະກິດນັ້ນ ມີອິດສະຫຼະໃນການເຮັດວຽກ ສາມາດວາງແຜນ ດ້ວຍຕົນເອງ ບໍ່ຄືມະນຸດກິນເງິນເດືອນ ທີ່ຕ້ອງປະຕິບັດຕາມຜູ່ວ່າຈ້າງຕົນເອງ. ບາງຄັ້ງ ເປັນວຽກທີ່ບໍ່ຢາກເຮັດ ກໍຕ້ອງໄດ້ເຮັດ.

ການປະກອບອາຊີບທຸລະກິດນັ້ນ ຕ້ອງການລະດັບຄວາມຮູ້ທາງດ້ານການສຶກສາສາມັນແຕກຕ່າງກັນ. ມີຫຼາຍອາຊີບທີ່ບໍ່ຕ້ອງການພື້ນຖານຄວາມຮູ້ສູງເຖິງລະດັບມັດທະຍົມຕອນປາຍກໍເຮັດໄດ້.

ສຳລັບ ນັກຮຽນທີ່ຮຽນຈົບມັດທະຍົມຕອນປາຍ ມີທາງເລືອກດັ່ງນີ້:

1. ບໍ່ຕ້ອງຮຽນວິຊາຊີບຕໍ່,ໄປປະກອບອາຊີບໄດ້ເລີຍ ເຊັ່ນ: ເປັນພະນັກງານຮັບຕ້ອນ, ເປັນພະນັກງານຂາຍ, ເປັນຜູ່ຊ່ວຍ ຫຼື ພະນັກງານເຝົ້າຫັດໃນອູ່ສ້ອມແປງ ຫຼື ໂຮງງານຕ່າງໆ.ໃນສະຖານທີ່ດັ່ງກ່າວ ຈະມີຜູ່ເຝົ້າແອບວຽກທີ່ເຮົາຕ້ອງເຮັດນັ້ນເລີຍ.



2. ໄປຮັບການອົບຮົມໄລຍະສັ້ນ ບໍ່ເຖິງປີ ເພື່ອປະກອບທຸລະກິດຂະໜາດນ້ອຍຂອງຕົນເອງ ເຊັ່ນ ຂັບລົດຮັບສົ່ງ, ຊ່າງຕັດຜົມ, ຊ່າງເສີມສວຍ, ຊ່າງຕັດຫຍິບ, ລ້ຽງປາກະຊັງ, ລ້ຽງໄກ່ພັນ ແລະອື່ນໆ.

3. ໄປຮຽນໂຮງຮຽນການຊ່າງ ໄລຍະ 2 ຫາ 3 ປີ ແລ້ວ ປະກອບອາຊີບ ຊ່າງແປງລົດ, ຊ່າງໄມ້(ຜະລິດ)ເຟີນີເຈີ, ຊ່າງເຫຼັກ, ຊ່າງ ໄຟຟ້າ, ຊ່າງກໍ່ສ້າງ, ຊ່າງປຸງແຕ່ງອາຫານ, ນັກບັນຊີ, ພະນັກງານຫ້ອງການ ແລະອື່ນໆ. ເມື່ອຈົບແລ້ວ ອາດໄປສະໝັກເຮັດ ວຽກນຳອູ່ສ້ອມແປງຕ່າງໆ ຫຼັງຈາກ ສະສົມປະສົບການແລ້ວ ກໍອາດແຍກອອກມາຕັ້ງໜ່ວຍທຸລະ ກິດຂອງຕົນເອງ.

4. ໄປຮຽນມະຫາວິທະຍາໄລ 4 - 5 ປີ.

ຫຼັງຈາກຮຽນຈົບແລ້ວ ກໍສາມາດເຮັດວຽກເປັນພະນັກ ງານ ຢູ່ທັງພາກລັດແລະເອກະຊົນ ຫຼື ປະກອບອາຊີບລ້ຽງ ຕົນເອງ ເຊັ່ນ ຮຽນວິສະວະກຳກໍ່ສ້າງ ຫຼັງຈາກຈົບແລ້ວ ອາດເປັນພະນັກງານຂອງບໍລິສັດກໍ່ສ້າງໃດໜຶ່ງກ່ອນ. ຫຼັງ ຈາກມີປະສົບການ ແລະທຶນຮອນແລ້ວ ກໍ່ສາມາດແຍກອອກ ມາຕັ້ງບໍລິສັດຂອງຕົນເອງ.

# ຈະຮຽນຕໍ່ຢູ່ໃສດີ?



ເມື່ອຢ່າງເຂົ້າໃກ້ທ້າຍສົກຮຽນ ນັກຮຽນຫຼາຍຄົນທີ່ຮຽນຢູ່ຂັ້ນສຸດທ້າຍຂອງແຕ່ລະຊັ້ນຮຽນ ຄົງຕັ້ງບັນຫາຂຶ້ນວ່າ ເສັງຈົບຢູ່ນີ້ແລ້ວ ຈະໄປຮຽນຕໍ່ຢູ່ໃສ? ສ່ວນຫຼາຍແລ້ວ ການຮຽນຕໍ່ຂອງນັກຮຽນທີ່ຈົບຊັ້ນປະຖົມ ຫຼື ທີ່ຈົບຊັ້ນມັດທະຍົມຕອນຕົ້ນ ມັກຈະແມ່ນໂຮງຮຽນສາມັນຊັ້ນຕໍ່ໄປ ເຊັ່ນວ່າ ຈົບປະຖົມແລ້ວ ຈະໄປຮຽນຕໍ່ມັດທະຍົມຕອນຕົ້ນຢູ່ໃສ ຫຼື ຈົບມັດທະຍົມຕອນຕົ້ນແລ້ວ ຈະໄປຮຽນມັດທະຍົມຕອນປາຍຢູ່ໃສ. ສຳລັບ ຄຳຖາມຂອງນັກຮຽນເຫຼົ່ານີ້ ຄົງຊອກຄຳຕອບບໍ່ຍາກປານໃດ ຖ້າທຽບໃສ່ຄຳຖາມຂອງນັກຮຽນ ທີ່ຮຽນຈົບມັດທະຍົມຕອນປາຍ. ການຮຽນຕໍ່ຂອງ ນັກຮຽນມັດທະຍົມຕອນປາຍ ແມ່ນພົວພັນເຖິງອະນາຄົດ ທາງດ້ານການງານອາຊີບຂອງເຂົາເຈົ້າ. ສະນັ້ນພວກນ້ອງນັກຮຽນທີ່ພວມຈະຈົບຊັ້ນ ມັດທະຍົມຕອນປາຍຄວນສຶກສາໃຫ້ເລິກເຊິ່ງ ກ່ອນຈະຕັດສິນໃຈວ່າ ຈະໄປຮຽນຕໍ່ຢູ່ໃສ.

ນັກຮຽນທີ່ມີໂອກາດຮຽນຮອດຂັ້ນສຸດທ້າຍຂອງຊັ້ນມັດທະຍົມປາຍ ຖືວ່າເປັນຜູ່ທີ່ມີຄວາມຮູ້ພື້ນຖານຫຼາຍ ສະນັ້ນຈຶ່ງມີໂອກາດທີ່ຈະ ເລືອກຮຽນຫຼາກຫຼາຍອາຊີບ. ແຕ່ເປັນໜ້າເສຍດາຍ ທີ່ເຫັນວ່າຜ່ານມາ ນັກຮຽນຫຼາຍຄົນບໍ່ຮູ້ຈະເລືອກຮຽນ ເຮັດໃຫ້ເສຍເວລາ ແລະທຶນຮອນຂອງພໍ່ແມ່. ຍົກຕົວຢ່າງ : ນັກຮຽນຜູ່ໜຶ່ງ ໄດ້ເສຍເວລາຮຽນມະຫາວິທະຍາໄລ 5-6 ປີ ໂດຍບໍ່ມັກວິຊາຊີບທີ່ຮຽນເລີຍ ເມື່ອຈົບແລ້ວກໍ່ໄປຍຶດ

ອາຊີບຂາຍສົ້ນເສື້ອຢູ່ຕະຫຼາດ ເຊິ່ງເປັນອາຊີບທີ່ລາວມັກ. ສ່ວນໝູ່ຂອງລາວ ໄດ້ສຶກສາຊອກຮູ້ຂໍ້ມູນເປັນຢ່າງດີ ຈຶ່ງຮູ້ວ່າ ການຮຽນຕໍ່ມະຫາວິທະຍາໄລ ບໍ່ຊ່ອຍໃນອາຊີບຄ້າຂາຍ ກໍ່ຈຶ່ງຕັດສິນໃຈຍຶດອາຊີບນີ້ ຕັ້ງແຕ່ຈົບມັດທະຍົມຕອນປາຍ. ສະນັ້ນເມື່ອຜ່ານໄປ 5-6 ປີ ລາວກໍ່ສາມາດສະສົມທຶນຮອນໄດ້ຫຼາຍກວ່າຜູ້ທີ່ຫາກໍ່ມາເລີ່ມຄ້າຂາຍ ຫຼັງຈາກຮຽນຈົບມະຫາວິທະຍາໄລ.

ພວກເຮົາສາມາດຫຼີກເວັ້ນຂໍ້ຜິດພາດຕ່າງໆ ຄືທີ່ກ່າວມາຂ້າງເທິງຫຼື ໃກ້ຄຽງກັນນີ້ໄດ້ແນວໃດ?

ກ່ອນອື່ນ ນັກຮຽນຕ້ອງເຂົ້າໃຈວ່າ ການຮຽນຊັ້ນສາມັນທີ່ຜ່ານມາ ນັ້ນ ແມ່ນການຮຽນເອົາຄວາມຮູ້ຄວາມສາມາດພື້ນຖານ ເພື່ອໃຫ້ສາມາດດຳລົງຊີວິດໃນສັງຄົມໄດ້ຢ່າງເໝາະສົມ. ການດຳລົງຊີວິດກໍ່ມີການຫາລ້ຽງຊີບໄປໃນຕົວ ໝາຍຄວາມວ່າ ການປະກອບອາຊີບ. ນັກຮຽນຜູ້ທີ່ຈົບ ຊັ້ນປະຖົມກໍ່ມີຄວາມຮູ້ຄວາມສາມາດສ່ຳລະດັບປະຖົມ ຄື ອ່ານອອກຂຽນ ໄດ້ຄິດໄລ່ເລກພື້ນຖານໄດ້. ຖ້າຢາກປະກອບອາຊີບກໍ່ສາມາດປະກອບໄດ້ຕາມລະດັບຂອງຕົນເອງ ເຊັ່ນເປັນຊາວນາຊາວສວນ ຄ້າຂາຍສິນຄ້າກະສິກຳ ຢູ່ໃນທ້ອງຖິ່ນຂອງຕົນເອງ. ຜູ້ທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ມີຄວາມຮູ້ຄວາມສາມາດລົ້ນຜູ້ທີ່ຈົບປະຖົມຢູ່ບອນວ່າ ໄດ້ມີຄວາມຮູ້ພື້ນຖານດ້ານສັງຄົມ ແລະດ້ານວິທະຍາສາດຫຼາຍກວ່າເດີມ ນອກຈາກນີ້ ກໍ່ໄດ້ຮຽນວິຊາຊີບພື້ນຖານອາຊີບຕ່າງໆ ເຊັ່ນ: ຊ່າງໄມ້, ຊ່າງກໍ່, ຊ່າງຕັດຫຍິບ ແລະອື່ນໆ. ຄວາມສາມາດໃນການປະກອບອາຊີບ ຈະຢູ່ໃນລະດັບສູງກວ່າຜູ້ຈົບຊັ້ນປະຖົມ. ເຊັ່ນວ່າ ຖ້າປະກອບອາຊີບເປັນຊ່າງໃນໂຮງເລື່ອຍ ໂຮງງານເຟີນີເຈີ ກໍ່ຈະໄດ້ລາຍຮັບດີກວ່າ ແລະ

ຄົງທີ່ກວ່າ ຜູ່ປະກອບອາຊີບເຮັດນາ. ຖ້າເຮັດອາຊີບ
ຄ້າຂາຍ ກໍ່ສາມາດສ້າງຜົນຜະລິດຕ່າງໆມາຂາຍເອງ
ເຊິ່ງຈະໄດ້ກຳໄລຫຼາຍກວ່າ ການຊື້ຂອງຜູ່ອື່ນມາຂາຍຕໍ່.
ຫຼືບໍ່ດັ່ງນັ້ນ ນັກຮຽນຈົບຊັ້ນມັດທະຍົມຕອນຕົ້ນ ຍັງມີ
ໂອກາດເລືອກຮຽນຕໍ່ໃນໂຮງຮຽນອາຊີວະ, ໂຮງຮຽນສ້າງຄູ,
ໂຮງຮຽນສ້າງແພດ ແລະອື່ນໆ ທັງໃນສາຍພົນລະເຮືອນ
ແລະສາຍປ້ອງກັນຄວາມສະຫງົບປ້ອງກັນຊາດ. ແນ່ນອນວ່າ
ການປະກອບອາຊີບ ຫຼັງຈາກໄດ້ຮຽນວິຊາຊີບນັ້ນ ຢ່າງເປັນ
ລະບົບກໍ່ຍ່ອມຈະປະສົບຜົນສຳເລັດ ແລະສ້າງລາຍຮັບໄດ້
ຫຼາຍກວ່າ ຜູ່ທີ່ຈົບມັດທະຍົມຕອນຕົ້ນທຳມະດາ. ໂດຍທົ່ວໄປ
ແລ້ວ ແລະສຳລັບລະດັບເສດຖະກິດຂອງປະເທດເຮົາ ປະຈຸ
ບັນ ຖ້າຜູ່ໃດໄດ້ຮຽນຮອດລະດັບນີ້ແລ້ວ ກໍ່ຖືວ່າຜູ່ນັ້ນສາມາດ
ດຳລົງຊີວິດຢູ່ໃນສັງຄົມ ໄດ້ຢ່າງໝັ້ນຄົງ.

ດັ່ນຊັ້ນ ຈະຮຽນລະດັບມັດທະຍົມຕອນປາຍນີ້ເພື່ອ
ຫຍັງ? ການ ຮຽນລະດັບມັດທະຍົມຕອນປາຍ ແມ່ນຮຽນເອົາ
ຄວາມຮູ້ພື້ນຖານໃນລະດັບສູງຂຶ້ນ ເພື່ອຈະໄປຮຽນຕໍ່ເອົາ
ວິຊາອາຊີບລະດັບສູງ. ເຊັ່ນວ່າ ຖ້າຈະຮຽນເປັນໝໍປົວພະ
ຍາດ ກໍ່ຕ້ອງໄດ້ຮຽນຄວາມຮູ້ພື້ນຖານດ້ານຊີວະສາດ ເຄມີ
ສາດກ່ອນ. ຖ້າຈະຮຽນເປັນວິສະວະກອນກໍ່ສ້າງ ກໍ່ຕ້ອງໄດ້
ຮຽນຄະນິດສາດ ຟີຊິກສາດ. ຖ້າຢາກຮຽນເປັນທະນາຍ
ຄວາມ ກໍ່ຕ້ອງໄດ້ຮຽນຄວາມຮູ້ພື້ນຖານຂອງນິຕິສາດ, ສັງຄົມ
ວິທະຍາແລະອື່ນໆ ໃນເມື່ອວ່າສ່ວນຫຼາຍແລ້ວ ນັກຮຽນທີ່
ຍ່າງເຂົ້າໂຮງຮຽນມັດທະຍົມຕອນປາຍ ຍັງບໍ່ຮູ້ຈັກວ່າຕົນເອງ
ຈະສົນໃຈອາຊີບໃດເທື່ອ ກໍ່ຈົ່ງໄດ້ຮຽນໝົດ ທຸກວິຊາພື້ນຖານ
ທັງສາຍສັງຄົມ ແລະສາຍທຳມະຊາດ. ຄວາມຈິງແລ້ວ ການ
ຮຽນວິຊາພື້ນຖານຕ່າງໆໃນຊັ້ນມັດທະຍົມຕອນປາຍນີ້

ຈະຊ່ວຍໃຫ້ນັກຮຽນໄດ້ຮູ້ໄປເທື່ອລະນ້ອຍວ່າ ຕົນເອງ ມັກອາຊີບ ໃດ ແລະເມື່ອຮອດຕອນຈົບ ຕ້ອງສາມາດ ຕັດສິນໃຈໄດ້ວ່າ ຈະໄປຮຽນຕໍ່ຢູ່ໃສ.

ການເລືອກຮຽນອາຊີບໃນລະດັບສູງນີ້ ຄວນຈະໃຊ້ ເວລາຮຶ່ນກອງ ສຶກສາໃຫ້ເລິກເຊິ່ງ ເພາະວ່າການຮຽນຢູ່ ລະດັບນີ້ມີຄວາມສົ້ນເປືອງຫຼາຍ ສົ້ນເປືອງທັງທຶນຮອນ ຂອງຜູ່ຮຽນຫຼື ພໍ່ແມ່ຜູ່ຮຽນ ສົ້ນເປືອງທັງງົບປະມານ ຂອງ ລັດ. ກ່ອນຈະໄດ້ວັດຖຸອຸປະກອນເຄື່ອງມືຕ່າງໆ ຕະຫຼອດ ເອກະສານວິຊາການຕ່າງໆ ທີ່ຕ້ອງແປຈາກພາສາຕ່າງ ປະເທດເອົາມາໃຊ້ສອນ ວິຊາອາຊີບເຫຼົ່ານີ້ ລ້ວນແລ້ວ ແຕ່ຕ້ອງໄດ້ໃຊ້ເງິນຄຳມະຫາສານ.

ສະນັ້ນເພື່ອຊ່ວຍໃນການຕັດສິນໃຈ ຜູ່ຂຽນຄຶດວ່າ ມີຢູ່ສີ່ເລື່ອງໃຫຍ່ທີ່ນ້ອງນັກຮຽນຕ້ອງໄດ້ເອົາໃຈໃສ່ຄື: ຄວາມມັກ, ລະດັບຄວາມຮູ້ພື້ນຖານທີ່ມີ, ສະຖານທີ່ສຶກ ສາທີ່ມີໃນປະເທດ, ສະພາບເສດຖະກິດ ຂອງພໍ່ແມ່.

ເລື່ອງຄວາມມັກນັ້ນ ສຳລັບນັກຮຽນຈຳນວນໜຶ່ງ ກໍ ອາດຈະບໍ່ມີບັນຫາ ບາງຄົນກໍ່ຄຶດມາແຕ່ນ້ອຍແລ້ວວ່າ ມັກ ອາຊີບໃດ. ແຕ່ສຳລັບຜູ່ທີ່ບໍ່ຮູ້ວ່າຕົນມັກອາຊີບໃດນັ້ນ ຂໍ ແນະນຳໃຫ້ສັງເກດເບິ່ງຜູ່ໃຫຍ່ອ້ອມຂ້າງວ່າ ເພິ່ນປະກອບ ອາຊີບຫຍັງ ໃນການປະກອບອາຊີບນັ້ນແມ່ນມີວຽກຫຍັງ ແດ່. ດີແທ້ໃຫ້ຕັ້ງໜ້າສໍ້ຖາມ ຕົວເພິ່ນເອງໂລດ. ເຊັ່ນວ່າ ວຽກຂອງຜູ່ ຈັດການບໍລິສັດ ແມ່ນເຮັດຫຍັງ? ແມ່ນວຽກ ເວົ້າກັບຄົນຫຼາຍບໍ່ ຫຼື ເປັນວຽກກັບເຄື່ອງຈັກ ເຄື່ອງລາງ ເຄື່ອງໄມ້ເຄື່ອງມື, ເຮັດຢູ່ກາງແຈ້ງ ຫຼື ນັ່ງ ໂຕະນັ່ງຕັ່ງ, ຢູ່

ບ່ອນເກົ່າຫຼືເດີນທາງຫຼາຍແລະອື່ນໆ. ອາດຈະຖາມເພີ່ມ ຕື່ມວ່າ ເພິ່ນມັກອາຊີບເພິ່ນບໍ່ ຖ້າມັກເປັນຫຍັງຈຶ່ງມັກ ຖ້າບໍ່ມັກ ເປັນຫຍັງຈຶ່ງບໍ່ມັກ. ຄຶດວ່າ ຖ້າພວກນ້ອງມັກ ຮຽນວາງແຜນໄປສອບຖາມຈັກອາຊີບໜຶ່ງຕໍ່ອາທິດ ຄຶດ ວ່າໝົດສົກຮຽນໜຶ່ງ ກໍ່ຄົງໄດ້ຂໍ້ມູນຫຼາຍສົມຄວນ. ສຳຄັນ ຕ້ອງບັນທຶກຄຳຕອບຂອງພວກເພິ່ນໄວ້. ບາດເຮົາຈະຕັດ ສິນໃຈ ຈະສາມາດຊອກອ່ານຄືນໄດ້.

ສົມມຸດວ່າ ນ້ອງເລືອກໄດ້ແລ້ວ ອາຊີບທີ່ຕົນເອງ ມັກ ຕໍ່ໄປຕ້ອງຊອກຮູ້ວ່າ ການຮຽນຮູ້ອາຊີບນັ້ນຕ້ອງການ ຄວາມຮູ້ພື້ນຖານດ້ານໃດແດ່ ແລະ ຕ້ອງເກັ່ງສ່ຳໃດ. ເລື່ອງນີ້ ພວກນ້ອງອາດສອບຖາມ ຜູ່ໃຫຍ່ຄືນອີກ ຫຼືບໍ່ດັ່ງ ນັ້ນກໍອາດໄປຖາມຮຸ່ນເອື້ອຍຮຸ່ນອ້າຍທີ່ພວມຮຽນອາຊີບ ນັ້ນຢູ່. ຂໍເບິ່ງວິຊາຮຽນຂອງພວກເພິ່ນ. ບາງເທື່ອນ້ອງ ມັກອາຊີບນັ້ນຢູ່ ແຕ່ວ່າ ຄວາມຮູ້ພື້ນຖານຂອງນ້ອງໃນ ດ້ານນັ້ນ ອາດອ່ອນໂພດ ກໍ່ບໍ່ຄວນເລືອກໄປຮຽນ ເພາະ ວ່າ ອາດຈະຮຽນບໍ່ຈົບ. ຫຼືວ່າ ຖ້ານ້ອງມັກອາຊີບນັ້ນຫຼາຍ ຍັງຢາກຮຽນ ນ້ອງກໍ່ອາດຈະຕັດສິນໃຈ ບຸກບືນຮຽນວິຊາ ພື້ນຖານທີ່ອ່ອນ ນັ້ນຕື່ມ ແລະ ກຽມຈິດໃຈໄວ້ວ່າ ຖ້າໄດ້ ໄປຮຽນອາຊີບນີ້ແທ້ ຕ້ອງໄດ້ເອົາໃຈໃສ່ວິຊາພື້ນຖານວິ ຊານີ້ຈຶ່ງຈະສຳເລັດ  ແລະໄດ້ປະກອບອາຊີບທີ່ເຮົາມັກ.

ອີກເລື່ອງໜຶ່ງ ທີ່ຕ້ອງໄດ້ຊອກຮູ້ແມ່ນ ສະຖານທີ່ ບ່ອນຮຽນອາຊີບ. ເພາະວ່າ ບາງເທື່ອຜູ່ໃຫຍ່ທີ່ເຮົາໄປສຳ ພາດນັ້ນ ເຄີຍຮຽນອາຊີບນັ້ນຢູ່ຕ່າງປະເທດ ເຮົາກໍ່ຕ້ອງ ຊອກຮູ້ວ່າ ຢູ່ບ້ານເຮົາເພິ່ນສອນອາຊີບນັ້ນບໍ່ ແລະສອນຢູ່ ໂຮງຮຽນໃດ. ອາດຈະຖາມຄູຂອງນ້ອງຜູ່ໃດຜູ່ໜຶ່ງກໍ່ໄດ້ ຫຼື

ບໍ່ດັ່ງນັ້ນ ເພິ່ນກໍ່ຈະແນະນຳໃຫ້ໄປຖາມກັບກົມກອງໃດ ກໍ ເປັນໄດ້.

ສຸດທ້າຍ ມີເລື່ອງໜຶ່ງທີ່ນ້ອງບໍ່ຄວນເບິ່ງຂ້າມ ແມ່ນ ສະພາບເສຖະກິດຂອງພໍ່ແມ່. ບໍ່ຫຼາຍກໍ່ໜ້ອຍພໍ່ແມ່ຕ້ອງ ໄດ້ຊ່ວຍນ້ອງໃນດ້ານເງິນຄຳ ສຳລັບຮຽນໃຫ້ຈົນຈົບ. ຢູ່ນີ້ ນ້ອງຕ້ອງເປັນຜູ້ຄິດໄລ່ ແລະຕອບຄຳຖາມຕໍ່ໄປນີ້ ດ້ວຍຕົນເອງວ່າ ເວລາຮຽນເຮົາຍັງກິນຢູ່ນຳພໍ່ແມ່ຫຼືບໍ່ ຫຼື ວ່າຕ້ອງເດີນທາງອອກຈາກບ້ານ ໄປອາໄສຢູ່ຫໍພັກ ຫຼື ເຊົ່າເຮືອນຢູ່. ຄ່າຢູ່ກິນ ຈະໝົດຫຼາຍປານໃດ. ຄ່າປຶ້ມສໍ ຈະໝົດຫຼາຍເທົ່າໃດ, ຄ່າເດີນທາງຈາກ ບ່ອນພັກໄປຫາ ບ່ອນຮຽນເດ? ນ້ອງຈະໄດ້ເບ້ຍລ້ຽງບໍ່? ເບ້ຍລ້ຽງນັ້ນພໍ ຈ່າຍຫຼືບໍ່? ນ້ອງຈະໄດ້ຂໍນຳພໍ່ແມ່ອີກຫຼາຍປານໃດ? ເພິ່ນຈະມີໃຫ້ບໍ່? ຖ້າເພິ່ນບໍ່ມີໃຫ້ ນ້ອງຈະມີທາງຊ່ວຍ ເຫຼືອຕົນເອງໄດ້ບໍ່? ມີວຽກງານອັນໃດ ທີ່ນ້ອງສາມາດເຮັດ ນອກໂມງຮຽນ ແລະ ສາມາດສ້າງລາຍໄດ້ ເພື່ອໃຫ້ນ້ອງ ໃຊ້ຈ່າຍໃນການຮຽນຫຼືບໍ່? ຢາກໄດ້ຂໍ້ມູນທັງໝົດເຫຼົ່ານີ້ ພວກນ້ອງ ຕ້ອງຊອກຖາມຊອກຮູ້ຈາກພວກຮຸ່ນເອື້ອຍ ອ້າຍທີ່ຮຽນໄປກ່ອນ.

ໃນການເລືອກອາຊີບທີ່ມັກ ນ້ອງຄວນເລືອກເອົາ ຫຼາຍອາຊີບ ແລະຈັດເປັນລຳດັບ ແຕ່ມັກຫຼາຍ ຮອດມັກ ໜ້ອຍເພື່ອຈະໄດ້ສົມທົບກັບຂໍ້ມູນ ທີ່ນ້ອງໄດ້ຈາກສາມ ເລື່ອງອື່ນ. ເຊັ່ນວ່າ ເຮົາມັກອາຊີບນັ້ນ ແຕ່ວ່າ ໂຮງຮຽນຢູ່ ໄກໂພດບໍ່ສາມາດມີເງິນພຽງພໍເພື່ອຮຽນໄດ້ ເຮົາກໍ່ອາດ ເລືອກເອົາ ອາຊີບທີ່ມັກຫຼຸດລົງມາ. ຫຼືວ່າ ນ້ອງມັກອາຊີບ ນັ້ນຢູ່ ແຕ່ຄວາມຮູ້ພື້ນຖານ ບໍ່ພຽງພໍ ກໍ່ອາດຈະເລືອກອາ

ຊີບທີ່ເຮົາມີຄວາມຮູ້ພື້ນຖານພຽງພໍແທນ ແລະອາດເວົ້າ
ໃຫ້ກຳລັງໃຈຕົນເອງ ວ່າບາດຮຽນໄປຫາກຈະມັກນຳຫຼັງ.
ຫຼືບໍ່ດັ່ງນັ້ນ ກໍ່ຄິດວ່າ ຮຽນອາຊີບນີ້ກ່ອນ ບາດໄດ້ວຽກເຮັດ
ມີເງິນຄຳຂອງຕົນເອງແລ້ວ ຈຶ່ງໄປຮຽນອາຊີບທີ່ຕົນເອງ
ມັກອີກ ກໍ່ຍັງບໍ່ຫຼ້າສວາຍດອກ.

ການເລືອກບ່ອນຮຽນຕໍ່ ແມ່ນການເລືອກອາຊີບ ທີ່
ພວກເຮົາຈະໄດ້ຍຶດຖືເພື່ອລ້ຽງຊີບຕົນເອງໄປຕະຫຼອດ
ຊົວດ. ສະນັ້ນ ພວກນ້ອງນັກ ຮຽນ ຄວນສະຫຼະເວລາ
ໃນການຄົ້ນຄິດກ່ອນຕັດສິນໃຈ. ຜູ້ໃຫຍ່ທີ່ຢູ່ອ້ອມຂ້າງ
ທີ່ເປັນພໍ່ແມ່ ພີ່ນ້ອງ ຄູ ຕະຫຼອດນັກຮຽນຮຸ່ນເອື້ອຍອ້າຍ
ສາມາດໃຫ້ຂໍ້ມູນທີ່ເປັນປະໂຫຍດ ໃຫ້ພວກນ້ອງໄດ້ສະ
ເໝີ.

(ພິມຄັ້ງທຳອິດໃນ ວາລະສານລານຄຳ ສະບັບທີ
4 ປີ 2008)



## ເອກະສານອ້າງອີງ


1. International Standard Classification of Education, ISCED 1997, UNESCO
2. ຄູ່ມືວິຊາຊີບ, ກົມອາຊີວະສຶກສາ, ກະຊວງສຶກສາທິການ, 2009
3. ຄູ່ມືແນະນຳການສຶກສາ ສຳລັບ ນັກສຶກສາ ມະຫາວິທະຍາໄລແຫ່ງຊາດ, ພິມໂດຍ ຫ້ອງການວິຊາການ ມະຫາວິທະຍາໄລແຫ່ງຊາດ, ວຽງຈັນ ປີ 2011
4. ຄຳສັ່ງແນະນຳ ຂອງ ກະຊວງສຶກສາທິການ, ສະບັບ ເລກທີ 476/ສສ.ອສ/2011 ລົງວັນທີ 13/6/2011
5. ແຈ້ງການ ຂອງພະແນກສຶກສາທິການ ນະຄອນຫຼວງ ວຽງຈັນ ກ່ຽວກັບການສອບເສັງ ເອົານັກສຶກສາເຂົ້າຮຽນ ຢູ່ສະຖາບັນການສຶກສາ ແຫ່ງຕ່າງໆ ທີ່ຂຶ້ນກັບກະຊວງ ສາທາລະນະສຸກ ປະຈຳປີ 2011-2012, ເລກທີ 829/ສສນວ/11 ລົງວັນທີ 4/7/2011
6. กิจกรรมแนะแนว Guidance Activities ม.1 , ม.2, ม.3 โดยคณาจารย์ศูนย์บริการจิตวิทยาและแนะแนว โรงเรียแห่งมหาวิทยาลัยเกษตรศาสตร์ ศูนย์วิจัยและพัฒนาการศึกษา, พ.ศ. 2551

ກ່ຽວກັບ ຜູ່ຂຽນ
ນ. ດາລາວັນ ພອນແກ້ວ
ເກີດ ວັນທີ 11 ທັນວາ 1958 ທີ່ ເມືອງ ມົງເປລິເອ, ປະເທດຝຣັ່ງ.

ການສຶກສາຊັ້ນປະຖົມ: ຮຽນ ປ1 ໃນປີ 1963-64 ທີ່ ໂຮງຮຽນ ປະຖົມ ບ້ານໂພນໄຊ ເມືອງ ໄຊເຊດຖາ, ວຽງຈັນ (ປະຈຸບັນ ແມ່ນ ວິທະຍາໄລ ວຽງຈັນຮ່າໂໜ້ຍ); ຮຽນ ປ2-ປ6 ທີ່ ໂຮງຮຽນ ປາດຖະໜາ (ປະຈຸບັນ ແມ່ນໂຮງຮຽນ ມັດທະຍົມສົມບູນ ເພງວັດ) ເມືອງສີສັດຕະນາກ, ວຽງຈັນ.

ການສຶກສາ ຊັ້ນມັດທະຍົມ: ເຂົ້າຮຽນ ມ1 ທີ່ ວິທະຍາໄລ ວຽງຈັນ (ປະຈຸບັນ ແມ່ນ ມັດທະຍົມສົມບູນວຽງຈັນ) ໃນປີ 1969-70 ເມື່ອຈົບ ມ3 ໄດ້ຍ້າຍໄປຮຽນທີ່ ເມືອງປາຣີ ປະເທດຝຣັ່ງ 2 ປີ (ໄດ້ເສັງຈົບ ມັດທະຍົມຕອນຕົ້ນ ຢູ່ທີ່ນັ້ນ) ກັບມາຮຽນ ມ6 ທີ່ ວິທະຍາໄລວຽງຈັນ ໃນປີ 1974-75 ແລະ ຈົບ ມ7 (ເວລານັ້ນ ເອີ້ນວ່າ ອ3) ໃນປີ 1976.

ການສຶກສາວິຊາການ: ຫຼັງຈາກ ໄດ້ເຂົ້າຢູ່ສູນກຽມໄປຮຽນ ຕ່າງປະເທດ ທີ່ບ້ານຮ່ອງຄ້າ, ເມືອງຈັນທະບູລີ ສົກຮຽນໜຶ່ງ, ໄດ້ໄປຮຽນຕໍ່ທີ່ ອະດີດ ສະຫະພາບໂຊວຽດ ໃນສົກຮຽນ 1977-78. ສົກຮຽນທຳອິດ ຮຽນຢູ່ ໂຮງຮຽນກຽມ ສຳລັບນັກ ສຶກສາຕ່າງປະເທດ ທີ່ນະຄອນຫຼວງ ໂມສະກູ. ສົກຮຽນ 1978-79 ເຂົ້າຮຽນວິຊາສະເພາະ ຂະແໜງ ຟີຊິກສາດ ທີ່ ມະຫາວິທະຍາໄລແຫ່ງລັດເບຼລາຣຸດຊີ ທີ່ ເມືອງ ມິນສກ໌, ໃຊ້ເວລາຮຽນ 5 ສົກຮຽນ ຈົບໄດ້ປະລິນຍາໂທ ດ້ານຄະນິດສາດ ແລະ ຟີຊິກ ສາດ ໃນປີ 1983.

ການປະກອບອາຊີບ:

ເປັນພະນັກງານວິຊາການ ທີ່ ກົມມະຫາວິທະຍາໄລ ແລະ ອາຊີວະສຶກສາ, ກະຊວງສຶກສາ 1 ປີ, ຮອດສົກຮຽນ 1984-85 ໄດ້ຍ້າຍໄປເປັນຄູຟີຊິກສາດ ທີ່ ມະຫາວິທະຍາໄລ ສັບພະວິຊາ 2 ທັນວາ (ປະຈຸບັນ ແມ່ນ ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດ) ທີ່ ໂສກປ່າຫຼວງ. ຫຼັງຈາກ ໄດ້ໂຮມເຂົ້າເປັນ ມະຫາວິທະຍາໄລແຫ່ງຊາດ ໄດ້ ສອງ ສົກຮຽນ ຄື ໃນສົກຮຽນ 1998-99 ໄດ້ຍ້າຍໄປເປັນຄູວິຊາ ຟີຊິກສາດ ທີ່ ຄະນະວິທະຍາສາດທຳມະຊາດ, ມະຫາວິທະ ຍາໄລແຫ່ງຊາດ ທີ່ ດົງໂດກ.

ໃນປີ 2003 ໄດ້ລາຈາກອາຊີບລັດຖະກອນ ໄປປະກອບ ອາຊີບ ເປັນທີ່ປຶກສາດ້ານການສຶກສາ ໃນໂຄງການຕ່າງໆ ຂອງກະຊວງສຶກສາ ຈົນຮອດປະຈຸບັນ. ຄຽງຄູ່ກັນ ກໍເປັນຜູ່ ປະກອບການໂຮງຮຽນ ເອກະຊົນ ທັງບໍລິຫານດ້ວຍຕົນເອງ ແລະສອນວິຊາແນະແນວ ຫ້ອງ ມ4 ແລະ ມ7 (ໂຮງຮຽນ ປະຖົມ ແລະມັດທະຍົມສົມບູນ ພອນແກ້ວວິທະຍາ). ນອກ ຈາກນີ້ ກໍເປັນຜູ່ປະກອບການດ້ານສື່ມວນຊົນ ທັງເປັນ ຫົວໜ້າບັນນາທິການ (ວາລະສານ ລານຄຳ).

ຈະຮຽນຕໍ່ຢູ່ໃສດີ
ຄູ່ມື ສຳລັບນັກຮຽນ ມັດທະຍົມສຶກສາຕອນຕົ້ນ
ແລະມັດທະຍົມສຶກສາຕອນປາຍ

ໂດຍ ດາລາວັນ ພອນແກ້ວ

ຮູບປະກອບໂດຍ ຊຶກໂກ້ ມິລາກົ໋ງ

ຈັດພິມ ໂດຍ ສຳນັກພິມ ດອກເກດ

ພິມທີ່ ພຣະໄຊ ກຣາບຟິກ

ຈັດຈຳໜ່າຍໂດຍ ຮ້ານປຶ້ມ ດອກເກດ

ຖະໜົນໂພນທັນ-ຮ່ອງແກ, ບ້ານໂພນທັນເໜືອ, ມ. ໄຊເຊດຖາ

ນະຄອນຫຼວງວຽງຈັນ. ສປປລາວ

ໂທ/ແຟ໋ກ: (+ 856-21) 264633

e-mail:dokked@veetoo.net

www.dokked.com

ນັກຮຽນ ປີສຸດທ້າຍ ຂອງມັດທະຍົມຕອນປາຍ
ມັກແຕ່ຄິດວ່າ ຮຽນຈົບແລ້ວ ຈະໄປຮຽນຕໍ່
ແລະມັກຈະຄິດຫາແຕ່ເລື່ອງສະຖາບັນ
ບ່ອນຮຽນຢ່າງດຽວ ໂດຍບໍ່ໄດ້ຄຳນຶງເຖິງວ່າ
ການເລືອກບ່ອນຮຽນຕໍ່ ແມ່ນກ່ຽວຂ້ອງ
ກັບການເລືອກອາຊີບ ທີ່ຕົນເອງຈະປະກອບ
ໃນອະນາຄົດນັ້ນເອງ.
ປຶ້ມຫົວນີ້ ສະໜອງຂໍ້ມູນ, ຄວາມຮູ້ ແລະຂໍ້ຄິດເຫັນ
ກ່ຽວກັບວິທີການເລືອກອາຊີບ,
ອາຊີບໃດ ເໝາະສົມກັບບຸກຄົນປະເພດໃດ,
ອາຊີບໃດຮຽນຢູ່ໃສ,...

ດອກແດ
DokkeD